ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 182 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 10.9.2014.

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍການກວດສອບອິດສະລະ

---

- ອີງຕາມ ລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້1;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 09 / ສພຊ, ລົງວັນທີ 22 ກໍລະກົດ 2014;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 031 /ຄປຈ,ລົງວັນທີ 22/08/2014.

### ປະທານປະເທດ

### ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:

ມາດຕາ 1. ປະກາດໃຊ້ກົດໝາຍ ວ່າດ້ວຍການກວດສອບອິດສະລະ.

ມາດຕາ 2. ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ

ເລກທີ 09 /ສພຊ

# ມະຕິຕົກລົງ

## ຂອງ

## ສະພາແຫ່ງຊາດ ແຫ່ງ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການຕົກລົງຮັບຮອງເອົາ ກົດໝາຍວ່າດ້ວຍ ການກວດສອບອິດສະລະ**

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງ ສະພາແຫ່ງຊາດ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການກວດສອບອິດສະລະ ໃນວາລະກອງປະຊຸມຕອນບ່າຍ ຂອງວັນທີ 22 ກໍລະກົດ 2014

**ກອງປະຊຸມໄດ້ຕົກລົງ:**

**<u>ມາດຕາ 1</u>** ຮັບຮອງເອົາກົດໝາຍວ່າດ້ວຍ ການກວດສອບອິດສະລະ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

**<u>ມາດຕາ 2</u>** ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນະຄອນຫຼວງວຽງຈັນ, ວັນທີ 22 ກໍລະກົດ 2014**

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------------

ສະພາແຫ່ງຊາດ

ເລກທີ 51 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 22 ກໍລະກົດ 2014

# ກົດໝາຍ
# ວ່າດ້ວຍ ການກວດສອບອິດສະລະ

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາ ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານກວດສອບອິດສະລະ ເພື່ອໃຫ້ວຽກງານດັ່ງກ່າວ ມີຄວາມເຂັ້ມແຂງ, ຖືກຕ້ອງ, ໂປ່ງໃສ, ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດຂອງສັງຄົມ, ນັກກວດສອບ, ເປົ້າໝາຍຖືກກວດສອບ, ສະກັດກັ້ນ ປາກົດການຫຍໍ້ທໍ້ທາງດ້ານການຄຸ້ມຄອງການເງິນ, ສົ່ງເສີມ ແລະ ສ້າງຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ເຮັດໃຫ້ສັງຄົມມີຄວາມຍຸຕິທຳ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມໃຫ້ຂະຫຍາຍຕົວ ແລະ ໝັ້ນຄົງ.

### ມາດຕາ 2 ການກວດສອບອິດສະລະ

ການກວດສອບອິດສະລະ ແມ່ນ ການກວດສອບເອກະສານລາຍງານການເງິນ ຂອງເປົ້າໝາຍຖືກກວດສອບ ບົນພື້ນຖານສັນຍາ ລະຫວ່າງ ເປົ້າໝາຍດັ່ງກ່າວ ກັບ ວິສາຫະກິດກວດສອບ ຊຶ່ງດຳເນີນຢ່າງເປັນເອກະລາດ ໂດຍນັກກວດສອບຂອງວິສາຫະກິດກວດສອບ.

ມາດຕາ 3 **ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສະພາມາດຕະຖານສາກົນດ້ານການກວດສອບ ແລະ ການຮັບປະກັນ** ໝາຍເຖິງ ອົງການຈັດຕັ້ງ ທີ່ຖືກສ້າງຂຶ້ນພາຍໃຕ້ການຄຸ້ມຄອງ ຂອງສະຫະພັນນັກບັນຊີສາກົນ ແລະ ອົງການສ້າງມາດຕະຖານທີ່ເປັນເອກະລາດ ຊຶ່ງພັດທະນາ ປຶ້ມຄູ່ມື, ມາດຕະຖານດ້ານການກວດສອບ ແລະ ການຮັບປະກັນ ສຳລັບຮັບໃຊ້ນັກວິຊາຊີບການບັນຊີ;

2. **ສະພາມາດຕະຖານສາກົນດ້ານຈັນຍາບັນສຳລັບນັກວິຊາຊີບການບັນຊີ** ໝາຍເຖິງ ອົງການທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງສະຫະພັນນັກບັນຊີສາກົນ ແລະ ເປັນອົງການສ້າງມາດຕະຖານທີ່ເປັນເອກະລາດ ຊຶ່ງອອກມາດຕະຖານດ້ານຈັນຍາບັນ ແລະ ລະບຽບການ ສຳລັບຮັບໃຊ້ນັກວິຊາຊີບການບັນຊີ ໃນທົ່ວໂລກ;

3. **ສະຫະພັນນັກບັນຊີສາກົນ** ໝາຍເຖິງ ອົງການຈັດຕັ້ງສາກົນ ສຳລັບວິຊາຊີບການບັນຊີ. ສະຫະພັນນັກບັນຊີສາກົນ ປະກອບດ້ວຍສະມາຊິກສົມບູນ ແລະ ສົມທົບ ທີ່ສ່ວນຫຼາຍເປັນອົງການຈັດຕັ້ງວິຊາຊີບການບັນຊີຂອງແຕ່ລະປະເທດ;

4. **ນັກກວດສອບ** ໝາຍເຖິງ ນັກຊ່ຽວຊານບັນຊີ ທີ່ເປັນພະນັກງານ ຂອງວິສາຫະກິດກວດສອບ;

5. **ນັກກວດສອບຕາມກົດໝາຍ (Statutory Auditor)** ໝາຍເຖິງ ນັກກວດສອບ ທີ່ມີສິດລົງລາຍເຊັນໃສ່ບົດລາຍງານການກວດສອບ ໃນນາມວິສາຫະກິດກວດສອບ.

6. **ຜູ້ປະກອບອາຊີບ** ໝາຍເຖິງ ນັກກວດສອບ, ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ;

7. **ນັກຊ່ຽວຊານບັນຊີ** ໝາຍເຖິງ ບຸກຄົນທີ່ໄດ້ຮັບໃບຢັ້ງຢືນເປັນນັກຊ່ຽວຊານບັນຊີ;

8. **ນັກວິຊາຊີບການບັນຊີ** ໝາຍເຖິງ ບຸກຄົນ ທີ່ມີໃບຢັ້ງຢືນເປັນນັກຊ່ຽວຊານບັນຊີ ປະກອບອາຊີບ ໃນວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຫຼື ໃນວິສາຫະກິດອື່ນ;

9. **ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ** ໝາຍເຖິງ ການຈັດຕັ້ງວິຊາຊີບການບັນຊີ ແລະ ກວດສອບ ຂອງນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດ ຈາກກະຊວງການເງິນ ແລະ ໄດ້ຂຶ້ນທະບຽນວິສາຫະກິດຖືກຕ້ອງຕາມລະບຽບກົດໝາຍ;

10.**ວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ** ໝາຍເຖິງ ວິສາຫະກິດ ທີ່ມີສ່ວນກ່ຽວຂ້ອງກັບຜົນປະໂຫຍດອັນສຳຄັນຂອງສາທາລະນະໃນດ້ານລັກສະນະ, ຂະໜາດ ຫຼື ຈຳນວນພະນັກງານຂອງທຸລະກິດ, ວິສາຫະກິດ ທີ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບ ຫຼື ທີ່ດຳເນີນທຸລະກິດ ຕົ້ນຕໍໃນການຄຸ້ມຄອງຮັກສາຊັບສິນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຊັ່ນ ທະນາຄານທຸລະກິດ, ບໍລິສັດປະກັນໄພ, ບໍລິສັດຫຼັກຊັບ ແລະ ສະຖາບັນການເງິນອື່ນ ທີ່ມີຂອບເຂດທຸລະກິດກວ້າງຂວາງ;

11.**ເອກະສານລາຍງານການເງິນ** ໝາຍເຖິງ ເອກະສານທີ່ສະແດງກ່ຽວກັບຖານະການເງິນ, ຜົນການດຳເນີນງານດ້ານການເງິນ, ກະແສເງິນສົດ, ສ່ວນປ່ຽນແປງທຶນຂອງວິສາຫະກິດ ແລະ ເອກະສານຊ້ອນທ້າຍເອກະສານລາຍງານການເງິນ;

12.**ເອກະສານລາຍງານການເງິນລວມກິດຈະການ** ໝາຍເຖິງ ເອກະສານລາຍງານການເງິນຂອງບໍລິສັດແມ່ ຫຼື ກຸ່ມບໍລິສັດ ພ້ອມທັງບໍລິສັດໃນກຸ່ມ ທີ່ສະແດງອອກເປັນເອກະສານລາຍງານການເງິນຂອງບໍລິສັດດຽວ;

13.**ຜູ່ຮຸ້ນສ່ວນບໍລິຫານ** ໝາຍເຖິງ ນັກວິຊາຊີບການບັນຊີ ທີ່ຖືຮຸ້ນ ແລະ ມີສິດຕັດສິນບັນຫາໃນວິສາຫະກິດ ກ່ຽວກັບການປະຕິບັດຂໍ້ຜູກພັນ ໃນການໃຫ້ບໍລິການດ້ານວິຊາຊີບ;

14.**ຜູ່ຮຸ້ນສ່ວນຮັບຜິດຊອບງານ** ໝາຍເຖິງ ຜູ່ຮຸ້ນສ່ວນບໍລິຫານໃນວິສາຫະກິດກວດສອບທີ່ມີຄວາມຮັບຜິດຊອບ ຕໍ່ການປະຕິບັດຂໍ້ຜູກພັນ, ຜົນການກວດສອບ ແລະ ລາຍງານການກວດສອບຂອງວິສາຫະກິດ.

### ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານກວດສອບອິດສະລະ

ລັດ ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ວຽກງານກວດສອບອິດສະລະ ໄດ້ດຳເນີນຢ່າງເປັນເອກະລາດ ແລະ ເຂັ້ມງວດ ຕໍ່ທຸກການເຄື່ອນໄຫວຂອງເປົ້າໝາຍຖືກກວດສອບ ເພື່ອໃຫ້ມີຄວາມໂປ່ງໃສ, ຍຸຕິທຳ ແລະ ຖືກຕ້ອງຕາມມາດຕະຖານ, ລະບຽບກົດໝາຍ ແລະ ມີປະສິດທິຜົນ.

ລັດ ຊຸກຍູ້, ສົ່ງເສີມ ການລົງທຶນໃສ່ການພັດທະນາ ວິຊາຊີບການບັນຊີ ແລະ ການກວດສອບໃຫ້ມີຄວາມເຂັ້ມແຂງ ແລະ ສອດຄ່ອງກັບພາກພື້ນ ແລະ ສາກົນ ໃນແຕ່ລະໄລຍະ.

### ມາດຕາ 5 ຫຼັກການ ກ່ຽວກັບວຽກງານກວດສອບອິດສະລະ

ການກວດສອບອິດສະລະ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມລະບຽບກົດໝາຍ ແລະ ມາດຕະຖານວິຊາຊີບດ້ານການກວດສອບ;
2. ມີຄວາມທ່ຽງທຳ, ຮອບຄອບ, ພາວະວິໄສ ແລະ ເປັນເອກະລາດທາງດ້ານວິຊາການ;
3. ມີຄວາມໂປ່ງໃສ ແລະ ສັດຊື່ບໍລິສຸດ;
4. ຮັກສາຄວາມລັບ ແລະ ມີຈັນຍາບັນດ້ານວິຊາຊີບ.

### ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວວຽກງານກ່ຽວກັບບັນຊີ ແລະ ການກວດສອບອິດສະລະ ລວມທັງເປົ້າໝາຍຖືກກວດສອບ ຢູ່ ສປປ ລາວ.

### ມາດຕາ 7 ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານກວດສອບອິດສະລະ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ, ການຝຶກອົບຮົມ, ການສ້າງຄວາມສາມາດ ເພື່ອພັດທະນາການເຄື່ອນໄຫວວຽກງານກວດສອບອິດສະລະ ໃຫ້ເຂັ້ມແຂງ ແລະ ທັນສະໄໝ, ປະຕິບັດສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

# ພາກທີ II
# ການເຄື່ອນໄຫວການກວດສອບອິດສະລະ
## ໝວດທີ 1
## ການກວດສອບອິດສະລະ

**ມາດຕາ 8 ຮູບແບບການກວດສອບອິດສະລະ**

ການກວດສອບອິດສະລະ ມີ ສອງ ຮູບແບບ ດັ່ງນີ້ :

1. ການກວດສອບຕາມກົດໝາຍ;
2. ການກວດສອບຕາມຄວາມສະໝັກໃຈ.

ການກວດສອບຕາມກົດໝາຍ ແລະ ການກວດສອບຕາມຄວາມສະໝັກໃຈ ມີ ຂັ້ນຕອນ ແລະ ວິທີການດຳເນີນອັນດຽວກັນ ຕາມທີ່ໄດ້ກຳນົດໄວ້ ໃນມາດຕະຖານວິຊາຊີບດ້ານການກວດສອບ.

**ມາດຕາ 9 ການກວດສອບຕາມກົດໝາຍ**

ການກວດສອບຕາມກົດໝາຍ ແມ່ນ ການກວດສອບເອກະສານລາຍງານການເງິນ ປະຈຳປີ ຂອງເປົ້າໝາຍຖືກກວດສອບແບບບັງຄັບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 59 ຂອງກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 10 ການກວດສອບຕາມຄວາມສະໝັກໃຈ**

ການກວດສອບຕາມຄວາມສະໝັກໃຈ ແມ່ນ ການກວດສອບ ຕາມການສະເໜີຂອງເປົ້າໝາຍຖືກກວດສອບ ເພື່ອໃຫ້ວິສາຫະກິດກວດສອບ ດຳເນີນການກວດສອບເອກະສານລາຍງານການເງິນຂອງຕົນ ພາຍໃຕ້ສັນຍາທີ່ໄດ້ຕົກລົງຮ່ວມກັນ.

## ໝວດທີ 2
## ຂະບວນການກວດສອບ

**ມາດຕາ 11 ຂະບວນການກວດສອບ**

ການກວດສອບອິດສະລະ ຕ້ອງດຳເນີນຕາມຂະບວນການ ດັ່ງນີ້:

1. ການຄັດເລືອກນັກກວດສອບ;
2. ການສ້າງສັນຍາກວດສອບ;
3. ການສ້າງແຜນການກວດສອບ;
4. ການດຳເນີນການກວດສອບ;
5. ການສ້າງບົດລາຍງານການກວດສອບ.

ວິສາຫະກິດກວດສອບ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມຂະບວນການທີ່ໄດ້ກຳນົດໄວ້ໃນມາດຕະຖານວິຊາຊີບດ້ານການກວດສອບ.

**ມາດຕາ 12 ການຄັດເລືອກນັກກວດສອບ**

ການຄັດເລືອກນັກກວດສອບ ດຳເນີນດ້ວຍ ສອງ ວິທີ ດັ່ງນີ້:

1. ການປະມູນ ໂດຍກອງປະຊຸມໃຫຍ່ຜູ້ຖືຮຸ້ນ ຫຼື ກອງປະຊຸມ ຂອງການຈັດຕັ້ງທີ່ກ່ຽວຂ້ອງຂອງເປົ້າໝາຍຖືກກວດສອບ;

2. ການສະເໜີ ຂອງຜູ່ໃຫ້ຢືມ, ຜູ່ໃຫ້ທຶນ, ນັກລົງທຶນ ຫຼື ຕາມທີ່ໄດ້ກຳນົດໄວ້ໃນສັນຍາ.

**ມາດຕາ 13 ການສ້າງສັນຍາກວດສອບ**

ການສ້າງສັນຍາກວດສອບ ແມ່ນ ການເຊັນຂໍ້ຜູກພັນດ້ານການກວດສອບ ລະຫວ່າງ ວິສາຫະກິດກວດສອບ ກັບເປົ້າໝາຍຖືກກວດສອບ ຊຶ່ງເນື້ອໃນຂອງສັນຍາ ປະກອບດ້ວຍ ວັດຖຸປະສົງ, ຂອບເຂດການກວດສອບ, ກຳນົດເວລາ, ຄວາມຮັບຜິດຊອບຂອງວິສາຫະກິດກວດສອບ, ເປົ້າໝາຍຖືກກວດສອບ, ຮູບແບບ ແລະ ເນື້ອໃນ ຂອງບົດລາຍງານຜົນການກວດສອບ.

**ມາດຕາ 14 ການສ້າງແຜນການກວດສອບ**

**ການສ້າງແຜນການກວດສອບ ຕ້ອງດຳເນີນຕາມຂັ້ນຕອນ ດັ່ງນີ້:**

1. ສຶກສາລັກສະນະ ແລະ ສະພາບແວດລ້ອມຂອງລູກຄ້າ ລວມທັງການຄວບຄຸມພາຍໃນ;

2. ປະເມີນຜົນຄວາມສ່ຽງ ຂອງການລາຍງານຜິດພາດ ແລະ ຄວາມສ່ຽງຂອງການກວດສອບ;

3. ກຳນົດຍຸດທະສາດ, ສ້າງແຜນການກວດສອບ, ວາງແຜນງານກວດສອບ, ວິທີການກວດສອບ, ກຳນົດເປົ້າໝາຍ, ກະກຽມຄຳຖາມເຈາະຈົ້ມ, ສອບຖາມພາກສ່ວນທີ່ກ່ຽວຂ້ອງ ເພື່ອຊອກຫາຫຼັກຖານທີ່ແທດເໝາະ, ພຽງພໍ ແລະ ກຳນົດເວລາການກວດສອບ.

**ມາດຕາ 15 ການດຳເນີນການກວດສອບ**

ການດຳເນີນການກວດສອບ ຕ້ອງປະຕິບັດຕາມເນື້ອໃນຂອງສັນຍາກວດສອບ, ຕາມແຜນການ, ແຜນງານ, ມາດຕະຖານວິຊາຊີບດ້ານການກວດສອບ, ກຳນົດ ແລະ ແບ່ງຄວາມຮັບຜິດຊອບຢ່າງຈະແຈ້ງ ໃນໜ່ວຍງານກວດສອບ ໂດຍມີການຄວບຄຸມຢ່າງເຂັ້ມງວດຈາກຫົວໜ້າໜ່ວຍງານດັ່ງກ່າວ.

**ມາດຕາ 16 ການສ້າງບົດລາຍງານການກວດສອບ**

ບົດລາຍງານການກວດສອບ ຕ້ອງສ້າງຂຶ້ນຢ່າງຖືກຕ້ອງຕາມຂໍ້ບັງຄັບ ຂອງມາດຕະຖານວິຊາຊີບດ້ານການກວດສອບ ຊຶ່ງປະກອບດ້ວຍ:

1. ເນື້ອໃນການກວດສອບ;

2. ຄວາມຮັບຜິດຊອບ ຂອງເປົ້າໝາຍຖືກກວດສອບ ແລະ ວິສາຫະກິດກວດສອບ;

3. ຂອບເຂດ ແລະ ຫຼັກການສຳລັບການດຳເນີນການກວດສອບ;

4. ຄຳເຫັນຕໍ່ເອກະສານລາຍງານການເງິນ ທີ່ຖືກກວດສອບ.

ບົດລາຍງານການກວດສອບ ຕ້ອງມີລາຍເຊັນ ຂອງນັກກວດສອບຕາມກົດໝາຍ ຂອງວິສາຫະກິດກວດສອບ.

**ມາດຕາ 17 ຄຸນປະໂຫຍດຂອງບົດລາຍງານການກວດສອບ**

**ບົດລາຍງານການກວດສອບ ມີ ຄຸນປະໂຫຍດ ດັ່ງນີ້:**

1. ຜູ້ຖືຮຸ້ນ ນຳໃຊ້ເພື່ອເປັນພື້ນຖານໃຫ້ແກ່ການພິຈາລະນາຮັບຮອງເອົາບົດສະຫຼຸບຜົນການເຄື່ອນໄຫວຜ່ານມາ, ເປັນພື້ນຖານໃນການແບ່ງເງິນປັນຜົນ ແລະ ການວາງແຜນການປີຕໍ່ໄປ;

2. ຜູ້ບໍລິຫານ ນຳໃຊ້ເພື່ອສຳຫຼວດຄືນດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ພິຈາລະນາປັບປຸງ ແກ້ໄຂ;

3. ນັກລົງທຶນ ນຳໃຊ້ ເພື່ອປະເມີນຜົນການຄຸ້ມຄອງທຸລະກິດ ແລະ ຕັດສິນໃຈໃນການລົງທຶນ;

4. ຜູ້ໃຫ້ທຶນ, ເຈົ້າຂອງໂຄງການ ນຳໃຊ້ເພື່ອສຶກສາປະສິດທິຜົນ ກ່ຽວກັບການຄຸ້ມຄອງວ່າຖືກຕ້ອງຕາມແຜນການ ທີ່ໄດ້ວາງໄວ້ ຫຼື ບໍ່ ແລະ ຄວາມສາມາດໃນການຊຳລະເງິນກູ້ຢືມ ພ້ອມດອກເບ້ຍຄືນຜູ້ໃຫ້ຢືມ;

5. ນັກກວດສອບຄົນອື່ນ ນຳໃຊ້ເພື່ອເປັນພື້ນຖານໃຫ້ແກ່ການຕິດຕາມການປະຕິບັດຂໍ້ແນະນຳຂອງນັກກວດສອບຄົນກ່ອນ ແລະ ເປັນຈຸດເລີ່ມຕົ້ນໃນການວາງແຜນ ແລະ ກວດສອບໃນປີທີ່ຖືກມອບໝາຍໃຫ້ກວດສອບ;

6. ອົງການຈັດຕັ້ງຂອງລັດ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ ນຳໃຊ້ເປັນພື້ນຖານການຄິດໄລ່ເກັບອາກອນ, ຕີລາຄາຄວາມໜ້າເຊື່ອຖືຂອງລະບົບຂໍ້ມູນຂ່າວສານ ແລະ ເປັນພື້ນຖານໃຫ້ແກ່ການສະໜອງຂໍ້ມູນຂ່າວສານສະຖິຕິ;

7. ສານປະຊາຊົນ, ອົງການໄອຍະການປະຊາຊົນ ແລະ ອົງການສືບສວນ-ສອບສວນ ນຳໃຊ້ ເພື່ອເປັນຂໍ້ມູນຫຼັກຖານໃນການດຳເນີນຄະດີ.

**ມາດຕາ 18 ເອກະສານການກວດສອບ**

ເອກະສານການກວດສອບ ແມ່ນ ເອກະສານທີ່ນັກກວດສອບ ເກັບກຳ, ລວບລວມ, ສັງລວມ ແລະ ສ້າງຂຶ້ນ ໃນເວລາດຳເນີນການກວດສອບ ແລະ ບັນດາຂໍ້ມູນທີ່ໄດ້ຮັບ ເຊັ່ນ ໜັງສືຮັບວຽກ, ຍຸດທະສາດ ການກວດສອບລວມ ແລະ ແຜນງານກວດສອບ, ບົດລາຍງານການກວດສອບ, ຈົດໝາຍແນະນຳ, ເອກະສານລາຍງານການເງິນສະເພາະກິດຈະການ ຫຼື ລວມກິດຈະການ, ບົດລາຍງານປະຈຳປີ ຫຼື ບົດລາຍງານ ລວມກິດຈະການປະຈຳປີ ແລະ ເອກະສານອື່ນ ທີ່ປະກອບເປັນເອກະສານການກວດສອບ ເພື່ອເປັນພື້ນຖານ ໃນການໃຫ້ຄຳເຫັນຂອງນັກກວດສອບ.

ນັກກວດສອບ ຕ້ອງລວບລວມເອກະສານການກວດສອບໄວ້ໃນສຳນວນເອກະສານການກວດສອບພາຍໃນສາມເດືອນ ຫຼັງຈາກສຳເລັດການສ້າງບົດລາຍງານການກວດສອບ.

ວິສາຫະກິດກວດສອບ ຕ້ອງສ້າງເອກະສານການກວດສອບ ໂດຍສອດຄ່ອງກັບມາດຕະຖານວິຊາຊີບດ້ານການກວດສອບ.

## ໝວດທີ 3
## ການກວດສອບສຳລັບວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ

### ມາດຕາ 19 ການກວດສອບ ສຳລັບວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ

ການກວດສອບ ສຳລັບວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ນອກຈາກທີ່ກຳນົດໄວ້ໃນພາກທີ II, ໝວດທີ 2 ຂອງກົດໝາຍສະບັບນີ້ແລ້ວ ໃຫ້ປະຕິບັດເພີ່ມເຕີມ ດັ່ງນີ້:

1. ການຄັດເລືອກ ນັກກວດສອບຕາມກົດໝາຍ;
2. ກຳນົດເວລາ ແລະ ການສິ້ນສຸດ ຂອງສັນຍາກວດສອບ;
3. ການປ່ຽນແທນນັກກວດສອບຕາມກົດໝາຍ;
4. ການຍົກເລີກສັນຍາກວດສອບ;
5. ຄວາມເປັນເອກະລາດ ຂອງນັກກວດສອບຕາມກົດໝາຍ;
6. ການເປີດເຜີຍຄ່າບໍລິການການກວດສອບ;
7. ບົດລາຍງານຄວາມໂປ່ງໃສ.

### ມາດຕາ 20 ການຄັດເລືອກ ນັກກວດສອບຕາມກົດໝາຍ

ເປົ້າໝາຍຖືກກວດສອບທີ່ເປັນວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ຕ້ອງຄັດເລືອກນັກກວດສອບຕາມກົດໝາຍ ຕາມຂັ້ນຕອນ ດັ່ງນີ້:

1. ແຈ້ງເຊີນການຮັບສະໝັກນັກກວດສອບຕາມກົດໝາຍ ຢ່າງໜ້ອຍ ຫົກສິບວັນ ກ່ອນວັນເປີດກອງປະຊຸມຜູ້ຖືຮຸ້ນ ຫຼື ກອງປະຊຸມໃຫຍ່ຜູ້ຖືຮຸ້ນຂອງຕົນ ໃຫ້ສອດຄ່ອງຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ;

2. ເປົ້າໝາຍຖືກກວດສອບຕາມກົດໝາຍ ຕ້ອງຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ເອກະສານ ສະໝັກຂອງວິສາຫະກິດກວດສອບຢ່າງໜ້ອຍ ສາມສິບວັນ ກ່ອນວັນເປີດກອງປະຊຸມໃຫຍ່ ຜູ້ຖືຮຸ້ນເພື່ອໃຫ້ກອງປະຊຸມດັ່ງກ່າວພິຈາລະນາ;

3. ກອງປະຊຸມໃຫຍ່ຜູ້ຖືຮຸ້ນ ອາດພິຈາລະນາຄັດເລືອກນັກກວດສອບຕາມກົດໝາຍ ຈາກໜຶ່ງ ຫຼື ສອງ ວິສາຫະກິດຂຶ້ນໄປ ເພື່ອກວດສອບເອກະສານລາຍງານການເງິນປະຈຳປີຂອງຕົນກໍໄດ້;

4. ແຈ້ງຜົນການຄັດເລືອກ ໃຫ້ນັກກວດສອບຕາມກົດໝາຍທີ່ຖືກຮັບຮອງເອົາ.

### ມາດຕາ 21 ກຳນົດເວລາ ແລະ ການສິ້ນສຸດ ຂອງສັນຍາກວດສອບ

ສັນຍາກວດສອບ ລະຫວ່າງ ເປົ້າໝາຍຖືກກວດສອບ ຊຶ່ງເປັນວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ກັບ ວິສາຫະກິດກວດສອບ ມີອາຍຸການ ຫ້າປີການບັນຊີ ແລະ ສາມາດຕໍ່ໄດ້ອີກວາລະໜຶ່ງ, ແຕ່ຕ້ອງໃຫ້ມີການສັບປ່ຽນນັກກວດສອບຕາມກົດໝາຍຜູ້ໃໝ່.

ສັນຍາກວດສອບ ຈະສິ້ນສຸດ ກໍ່ຕໍ່ເມື່ອເອກະສານລາຍງານການເງິນປະຈຳປີ ຂອງປີການບັນຊີສຸດທ້າຍ ໄດ້ຖືກຮັບຮອງເອົາໂດຍກອງປະຊຸມໃຫຍ່ຜູ້ຖືຮຸ້ນຂອງວິສາຫະກິດ ຫຼື ກອງປະຊຸມອົງການຈັດຕັ້ງໃດໜຶ່ງ.

ໃນກໍລະນີ ວິສາຫະກິດກວດສອບ ມີຈຸດປະສົງຕໍ່ອາຍຸການກວດສອບ ໃຫ້ຍື່ນຄຳຮ້ອງຕໍ່ເປົ້າໝາຍຖືກກວດສອບຕາມກົດໝາຍ ຢ່າງໜ້ອຍ ຫົກສິບວັນ ກ່ອນໝົດອາຍຸສັນຍາ.

### ມາດຕາ 22 ການປ່ຽນແທນນັກກວດສອບຕາມກົດໝາຍ

ການປ່ຽນແທນນັກກວດສອບຕາມກົດໝາຍ ມີ ສອງກໍລະນີ ຄື:

1. ການປ່ຽນແທນຖາວອນ ແມ່ນ ການປ່ຽນແທນນັກກວດສອບຕາມກົດໝາຍຜູ້ກ່ອນ ໃນກໍລະນີມີການປະຕິເສດ, ລາອອກ ຫຼື ເສັຍຊີວິດ ຊຶ່ງຕ້ອງຄັດເລືອກ ແລະ ແຕ່ງຕັ້ງ ນັກກວດສອບ ຕາມກົດໝາຍຜູ້ໃໝ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 20 ຂອງກົດໝາຍສະບັບນີ້. ໜ້າທີ່ຂອງນັກກວດສອບຕາມກົດໝາຍທີ່ມາປ່ຽນແທນ ຈະສິ້ນສຸດຕາມສັນຍາ ຂອງນັກກວດສອບຕາມກົດໝາຍຜູ້ກ່ອນ;

2. ການປ່ຽນແທນຊົ່ວຄາວ ແມ່ນ ການປ່ຽນແທນນັກກວດສອບຕາມກົດໝາຍຜູ້ກ່ອນ ໃນກໍລະນີຈຳເປັນ, ນັກກວດສອບຕາມກົດໝາຍຜູ້ກ່ອນ ສາມາດກັບມາເຮັດວຽກຂອງຕົນຄືນ ພາຍຫຼັງກອງປະຊຸມໃຫຍ່ຜູ້ຖືຮຸ້ນ ຂອງເປົ້າໝາຍຖືກກວດສອບຕາມກົດໝາຍ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງໄດ້ຮັບຮອງເອກະສານລາຍງານການເງິນປະຈຳປີ.

ນັກກວດສອບຕາມກົດໝາຍທີ່ມາປ່ຽນແທນ ສາມາດເຂົ້າເຖິງຂໍ້ມູນຂ່າວສານ ແລະ ເອກະສານທີ່ກ່ຽວຂ້ອງກັບການກວດສອບຂອງນັກກວດສອບຕາມກົດໝາຍຜູ້ກ່ອນ.

### ມາດຕາ 23 ການຍົກເລີກສັນຍາກວດສອບ

ສັນຍາກວດສອບ ຈະຖືກຍົກເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີຂອງເປົ້າໝາຍຖືກກວດສອບ ຫຼື ນັກກວດສອບຕາມກົດໝາຍ;
2. ຖືກໂຈະການເຄື່ອນໄຫວດ້ານວິຊາຊີບ;
3. ຖືກລົບລ້າງໃບອະນຸຍາດເປັນນັກກວດສອບຕາມກົດໝາຍ ຫຼື ລາອອກ;
4. ດຳເນີນການກວດສອບບໍ່ເປັນເອກະລາດ, ບໍ່ໄດ້ຮັບການຮ່ວມມື ຫຼື ຖືກບັງຄັບໃຫ້ດຳເນີນການໃດໜຶ່ງ ທີ່ບໍ່ສອດຄ່ອງກັບລະບຽບກົດໝາຍ.

### ມາດຕາ 24 ຄວາມເປັນເອກະລາດຂອງນັກກວດສອບຕາມກົດໝາຍ

ຄວາມເປັນເອກະລາດຂອງນັກກວດສອບຕາມກົດໝາຍ ທີ່ກວດສອບວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ໃຫ້ປະຕິບັດ ດັ່ງນີ້:

1. ຢັ້ງຢືນຄວາມເປັນເອກະລາດຂອງຕົນ ໃຫ້ແກ່ຄະນະກຳມະການກວດສອບຂອງວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ຢ່າງເປັນລາຍລັກອັກສອນ ໃນແຕ່ລະປີ;

2. ແຈ້ງສັນຍາເພີ່ມເຕີມ ກ່ຽວກັບການໃຫ້ບໍລິການອື່ນ ຕໍ່ຄະນະກຳມະການກວດສອບ ຂອງວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ໃນແຕ່ລະປີ;

3. ປຶກສາຫາລືນຳຄະນະກຳມະການກວດສອບຂອງວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ກ່ຽວກັບບັນຫາ ແລະ ອຸປະສັກຕໍ່ຄວາມເປັນເອກະລາດ ແລະ ວິທີການປ້ອງກັນທີ່ນຳໃຊ້ເພື່ອຫຼຸດຜ່ອນບັນຫາ ແລະ ອຸປະສັກດັ່ງກ່າວ.

### ມາດຕາ 25 ການເປີດເຜີຍຄ່າບໍລິການການກວດສອບ

ນັກກວດສອບຕາມກົດໝາຍ ທີ່ກວດສອບວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ຕ້ອງເປີດເຜີຍຄ່າບໍລິການການກວດສອບ ພ້ອມດ້ວຍຄ່າບໍລິການອື່ນ ໂດຍແຍກໃຫ້ເຫັນການບໍລິການການກວດສອບ, ການບໍລິການທົບທວນຄືນ ແລະ ການບໍລິການອື່ນທີ່ບໍ່ແມ່ນການກວດສອບ ໃນໄລຍະດຳເນີນການກວດສອບ ໃນວາລະສານຂອງກະຊວງການເງິນ ແລະ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ.

### ມາດຕາ 26 ບົດລາຍງານຄວາມໂປ່ງໃສ

ວິສາຫະກິດກວດສອບ ທີ່ດຳເນີນການກວດສອບວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ຕ້ອງລາຍງານຄວາມໂປ່ງໃສປະຈຳປີ ລົງໃນເວັບໄຊຂອງຕົນ ພາຍໃນ ເກົ້າສິບວັນ ພາຍຫຼັງປີການບັນຊີ, ບົດລາຍງານດັ່ງກ່າວ ຢ່າງໜ້ອຍຕ້ອງມີເນື້ອໃນ ດັ່ງນີ້:

1. ຮູບແບບວິສາຫະກິດ ແລະ ການເປັນກຳມະສິດ;

2. ເຄືອຂ່າຍ ແລະ ຂໍ້ຕົກລົງທາງດ້ານກົດໝາຍ ແລະ ໂຄງປະກອບໃນເຄືອຂ່າຍ, ຖ້ານັກກວດສອບຢູ່ໃນເຄືອຂ່າຍໃດໜຶ່ງ;

3. ໂຄງສ້າງດ້ານການຄຸ້ມຄອງບໍລິຫານ;

4. ລະບົບຄວບຄຸມຄຸນນະພາບພາຍໃນ ແລະ ການລາຍງານ ກ່ຽວກັບຜົນການດຳເນີນງານຂອງລະບົບຄວບຄຸມຄຸນນະພາບ ໂດຍຄະນະຜູ້ບໍລິຫານ ຂອງວິສາຫະກິດກວດສອບ;

5. ການກວດກາການຮັບປະກັນຄຸນນະພາບຄັ້ງຫຼ້າສຸດ.

## ໝວດທີ 4
## ລະບຽບການເຄື່ອນໄຫວວິຊາຊີບບັນຊີ ແລະ ກວດສອບ

**ມາດຕາ 27 ລະບຽບການເຄື່ອນໄຫວວິຊາຊີບບັນຊີ ແລະ ກວດສອບ**

ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ໃຫ້ເຄື່ອນໄຫວຕາມລະບຽບການ ດັ່ງນີ້:

1. ຈັນຍາບັນດ້ານວິຊາຊີບ;
2. ມາດຕະຖານວິຊາຊີບດ້ານການກວດສອບ;
3. ການຮັບປະກັນຄຸນນະພາບພາຍໃນວິສາຫະກິດ;
4. ການປະກັນໄພຄ່າເສັຍຫາຍດ້ານວິຊາຊີບ;
5. ການຍົກລະດັບວິຊາຊີບແບບຕໍ່ເນື່ອງ.

**ມາດຕາ 28 ຈັນຍາບັນດ້ານວິຊາຊີບ**

ຈັນຍາບັນດ້ານວິຊາຊີບ ແມ່ນ ຫຼັກການພື້ນຖານໃນການປະພຶດ ແລະ ການເຄື່ອນໄຫວດ້ານວິຊາຊີບຂອງຜູ້ປະກອບອາຊີບບັນຊີ ແລະ ກວດສອບ.

ກະຊວງການເງິນ ປະກາດໃຊ້ ຈັນຍາບັນດ້ານວິຊາຊີບສໍາລັບນັກວິຊາຊີບການບັນຊີ ໂດຍສອດຄ່ອງກັບຈັນຍາບັນທີ່ສະຫະພັນນັກບັນຊີສາກົນ ແລະ ລະບຽບກົດໝາຍຂອງ ສປປ ລາວ ວາງອອກໃນແຕ່ລະໄລຍະ.

**ມາດຕາ 29 ມາດຕະຖານວິຊາຊີບດ້ານການກວດສອບ**

ມາດຕະຖານວິຊາຊີບດ້ານການກວດສອບ ແມ່ນ ລະບຽບການ ແລະ ວິທີການປະຕິບັດໃນການເຄື່ອນໄຫວດ້ານວິຊາຊີບບັນຊີ ແລະ ກວດສອບອິດສະລະ.

ກະຊວງການເງິນ ປະກາດໃຊ້ມາດຕະຖານວິຊາຊີບດ້ານການກວດສອບ ໂດຍສອດຄ່ອງກັບມາດຕະຖານສາກົນ ທີ່ສະພາມາດຕະຖານສາກົນດ້ານການກວດສອບ ແລະ ການຮັບປະກັນ ແລະ ລະບຽບກົດໝາຍ ຂອງ ສປປ ລາວ ວາງອອກໃນແຕ່ລະໄລຍະ.

**ມາດຕາ 30 ການຮັບປະກັນຄຸນນະພາບພາຍໃນວິສາຫະກິດ**

ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຕ້ອງສ້າງລະບົບການຮັບປະກັນຄຸນນະພາບໃຫ້ສອດຄ່ອງກັບກົດໝາຍສະບັບນີ້ ແລະ ມາດຕະຖານວິຊາຊີບດ້ານການກວດສອບ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ນັກກວດສອບດໍາເນີນວິຊາຊີບຢ່າງຖືກຕ້ອງ, ຮັບປະກັນຄວາມສົມເຫດສົມຜົນ ແລະ ລາຍງານຜົນການກວດສອບ ໃຫ້ແທດເໝາະກັບສະພາບການຕົວຈິງ.

ລະບົບການຮັບປະກັນຄຸນນະພາບ ປະກອບດ້ວຍ:

1. ຄວາມຮັບຜິດຊອບຂອງຄະນະບໍລິຫານ ຕໍ່ຄຸນນະພາບພາຍໃນວິສາຫະກິດກວດສອບ;
2. ຂໍ້ກໍານົດຈັນຍາບັນ ທີ່ກ່ຽວຂ້ອງ;

3. ການຮັບລູກຄ້າ ແລະ ການສືບຕໍ່ຮັບລູກຄ້າເກົ່າ ແລະ ວຽກທີ່ມີລັກສະນະສະເພາະ;
4. ບຸກຄະລາກອນ;
5. ຜົນການຈັດຕັ້ງປະຕິບັດ;
6. ການຕິດຕາມ ກວດກາ.

ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຕ້ອງໄດ້ຮັບການກວດກາລະບົບການຮັບປະກັນຄຸນນະພາບ ຈາກກະຊວງການເງິນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຢ່າງໜ້ອຍທຸກ ສີ່ປີ.

**ມາດຕາ 31 ການປະກັນໄພຄ່າເສັຍຫາຍດ້ານວິຊາຊີບ**

ວິສາຫະກິດກວດສອບ ຕ້ອງປະກັນໄພຄ່າເສັຍຫາຍດ້ານວິຊາຊີບ ເພື່ອຄໍ້າປະກັນການເສັຍຫາຍໃດໜຶ່ງທີ່ອາດຈະເກີດຂຶ້ນ ໃນເວລາປະຕິບັດຂໍ້ຜູກພັນດ້ານວິຊາຊີບຂອງຕົນ ແລະ ຕ້ອງສົ່ງສຳເນົາສັນຍາປະກັນໄພ ພ້ອມດ້ວຍນະໂຍບາຍການປະກັນໄພດ້ານວິຊາຊີບໃຫ້ກະຊວງການເງິນ ແລະ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ໃນແຕ່ລະປີ.

**ມາດຕາ 32 ການຍົກລະດັບວິຊາຊີບແບບຕໍ່ເນື່ອງ**

ຜູ້ປະກອບອາຊີບ ຕ້ອງເຂົ້າຮ່ວມການຍົກລະດັບວິຊາຊີບແບບຕໍ່ເນື່ອງ ຢ່າງໜ້ອຍ ໜຶ່ງຮ້ອຍຊາວຊົ່ວໂມງ ພາຍໃນກຳນົດ ສາມປີ ໃນແຕ່ລະປີບໍ່ໃຫ້ຫຼຸດ ຊາວຊົ່ວໂມງ ເພື່ອຍົກລະດັບຄວາມຮູ້ດ້ານທິດສະດີ, ຄວາມສາມາດດ້ານວິຊາຊີບ ແລະ ຈັນຍາບັນ.

ກະຊວງການເງິນ ອອກລະບຽບການ ກ່ຽວກັບການຍົກລະດັບວິຊາຊີບແບບຕໍ່ເນື່ອງ ສຳລັບຜູ້ປະກອບອາຊີບ ໃນແຕ່ລະໄລຍະ.

## ພາກທີ III
## ນັກຊ່ຽວຊານບັນຊີ
### ໝວດທີ 1
### ການເປັນນັກຊ່ຽວຊານບັນຊີ

**ມາດຕາ 33 ເງື່ອນໄຂການເປັນນັກຊ່ຽວຊານບັນຊີ**

ບຸກຄົນທີ່ຈະເປັນນັກຊ່ຽວຊານບັນຊີ ຕ້ອງມີໃບຢັ້ງຢືນການສອບເສັງຈົບຫຼັກສູດວິຊາຊີບຊ່ຽວຊານບັນຊີ ແລະ ໃບຢັ້ງຢືນການຝຶກງານເປັນນັກຊ່ຽວຊານບັນຊີ.

**ມາດຕາ 34 ໃບຢັ້ງຢືນການສອບເສັງຈົບຫຼັກສູດວິຊາຊີບຊ່ຽວຊານບັນຊີ**

ບຸກຄົນທີ່ຈະໄດ້ຮັບໃບຢັ້ງຢືນການສອບເສັງຈົບຫຼັກສູດວິຊາຊີບຊ່ຽວຊານບັນຊີ ຕ້ອງໄດ້ຮັບການຝຶກອົບຮົມ ຢ່າງຖືກຕ້ອງ, ຄົບຖ້ວນ ແລະ ສອບເສັງຜ່ານຫຼັກສູດວິຊາຊີບຊ່ຽວຊານບັນຊີ.

### ມາດຕາ 35 ໃບຢັ້ງຢືນການຝຶກງານເປັນນັກຊ່ຽວຊານບັນຊີ

ບຸກຄົນທີ່ຈະໄດ້ຮັບໃບຢັ້ງຢືນການຝຶກງານເປັນນັກຊ່ຽວຊານບັນຊີ ຕ້ອງໄດ້ຮັບການຝຶກງານວຽກງານບັນຊີ ແລະ ກວດສອບ ເປັນເວລາ ສາມປີ ຢູ່ ພາຍໃນ ຫຼື ຕ່າງປະເທດ ຍົກເວັ້ນ ບຸກຄົນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 36 ຂອງກົດໝາຍສະບັບນີ້.

### ມາດຕາ 36 ການຍົກເວັ້ນການຝຶກງານເປັນນັກຊ່ຽວຊານບັນຊີ

ບຸກຄົນທີ່ໄດ້ຮັບການຍົກເວັ້ນການຝຶກງານເປັນນັກຊ່ຽວຊານບັນຊີ ມີ ດັ່ງນີ້:

1. ຜູ້ມີ ປະກາສະນີຍະບັດ ຫຼື ໃບຢັ້ງຢືນ ທີ່ປຶກສາບັນຊີ, ມີປະສົບການເຮັດວຽກດ້ານການບັນຊີ ແລະ ກວດສອບ ຢ່າງໜ້ອຍ ຫ້າ ປີຂຶ້ນໄປ;
2. ຜູ້ມີໃບຢັ້ງຢືນຊ່ຽວຊານບັນຊີ ຈາກຕ່າງປະເທດ;
3. ອາຈານສິດສອນວິຊາ ການບັນຊີ ແລະ ກວດສອບ ຢ່າງໜ້ອຍ ສິບປີ;
4. ຜູ້ມີລະດັບການສຶກສາປະລິນຍາໂທ ຫຼື ປະລິນຍາເອກ ດ້ານການບັນຊີ, ການເງິນ ແລະ ກວດສອບ ແລະ ມີປະສົບການ ກ່ຽວກັບວຽກງານບັນຊີ ແລະ ກວດສອບ ຢ່າງໜ້ອຍ ສິບປີ;
5. ສາດສະດາຈານ, ຮອງສາດສະດາຈານ ດ້ານການບັນຊີ, ການເງິນ ແລະ ການກວດສອບ.

### ມາດຕາ 37 ໃບຢັ້ງຢືນເປັນນັກຊ່ຽວຊານບັນຊີ

ບຸກຄົນທີ່ຈະໄດ້ຮັບໃບຢັ້ງຢືນເປັນນັກຊ່ຽວຊານບັນຊີ ຕ້ອງປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 34, 35 ແລະ 36 ຂອງກົດໝາຍສະບັບນີ້ ໂດຍແມ່ນກະຊວງການເງິນ ເປັນຜູ້ອອກໃຫ້ຕາມການສະເໜີ ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ.

## ໝວດທີ 2
## ສິດ ແລະ ພັນທະ ຂອງນັກຊ່ຽວຊານບັນຊີ

### ມາດຕາ 38 ສິດ ຂອງນັກຊ່ຽວຊານບັນຊີ

ນັກຊ່ຽວຊານບັນຊີ ມີ ສິດ ດັ່ງນີ້ :

1. ປະກອບອາຊີບບັນຊີ ແລະ ກວດສອບ ໃນຮູບແບບນິຕິບຸກຄົນ, ຂາຮຸ້ນ ຫຼື ພະນັກງານໃນວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ;
2. ປະກອບອາຊີບເປັນ ຫົວໜ້າບັນຊີ, ຜູ້ຈັດການດ້ານການເງິນ, ພະນັກງານບັນຊີ ຫຼື ຕຳແໜ່ງໃດໜຶ່ງ ໃນວິສາຫະກິດອື່ນ.

ມາດຕາ 39 ພັນທະ ແລະ ຄວາມຮັບຜິດຊອບ ຂອງ ນັກຊ່ຽວຊານບັນຊີ

ນັກຊ່ຽວຊານບັນຊີ ມີ ພັນທະ ແລະ ຄວາມຮັບຜິດຊອບ ດັ່ງນີ້:

1. ເຄື່ອນໄຫວວຽກງານດ້ານວິຊາຊີບ ຢ່າງຖືກຕ້ອງ, ພາວະວິໄສ ແລະ ຮັບປະກັນຄວາມເປັນເອກະລາດຢ່າງແທ້ຈິງ;

2. ມີຄວາມບໍລິສຸດໃຈ, ມີຄວາມຫ່ຽງທຳ, ສັດຊື່ ໃນການດຳເນີນວິຊາຊີບ ໃນ ສປປ ລາວ ຕາມທີ່ ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ແລະ ຈັນຍາບັນ ສຳລັບນັກວິຊາຊີບການບັນຊີ;

3. ຮັກສາຊື່ສຽງ ຂອງວິຊາຊີບ ດ້ວຍການເຄົາລົບ ແລະ ປະຕິບັດລະບຽບກົດໝາຍ ແລະ ຈັນຍາບັນດ້ານວິຊາຊີບ;

4. ຮັບປະກັນຄວາມຖືກຕ້ອງ ແລະ ສອດຄ່ອງ ກັບມາດຕະຖານການລາຍງານການເງິນ ທີ່ນຳໃຊ້ໃນແຕ່ລະໄລຍະໃນການສ້າງ ຫຼື ຮັບຮອງ ເອກະສານລາຍງານການເງິນ ຖ້າວ່າຖືກມອບໝາຍ ໃຫ້ຮັບຜິດຊອບໃນການສ້າງເອກະສານລາຍງານການເງິນ;

5. ຮັບແຕ່ໜ້າທີ່ວຽກງານ ທີ່ຕົນມີຄວາມຊຳນານເທົ່ານັ້ນ ຫຼື ໄດ້ຮັບການຝຶກອົບຮົມສະເພາະ ຫຼື ມີຜູ້ຊ່ຽວຊານສະເພາະດ້ານ ໃຫ້ຄຳປຶກສາ ແລະ ຄຳແນະນຳ ຢ່າງເປັນປະຈຳ.

## ພາກທີ IV
## ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ
### ໝວດທີ 1
### ການສ້າງຕັ້ງ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ

ມາດຕາ 40 ການສ້າງຕັ້ງ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ

ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງ ສ້າງຕັ້ງ ຫຼື ຮ່ວມທຶນ ກັບວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຢູ່ ສປປ ລາວ ໃຫ້ຍື່ນຄຳຮ້ອງ ຕໍ່ຫ້ອງການບໍລິການຜ່ານປະຕູດຽວ ຂອງຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມການເຫັນດີ ຂອງຂະແໜງການການເງິນ.

ມາດຕາ 41 ເງື່ອນໄຂການຂໍອະນຸຍາດດຳເນີນວິສາຫະກິດບັນຊີ

ຜູ້ມີຈຸດປະສົງຂໍອະນຸຍາດດຳເນີນວິສາຫະກິດບັນຊີ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນນັກຊ່ຽວຊານບັນຊີ;
2. ເປັນສະມາຊິກຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ;
3. ບໍ່ເປັນລັດຖະກອນ, ບໍ່ເປັນເຈົ້າຂອງ, ບໍ່ເປັນຂາຮຸ້ນ ຫຼື ພະນັກງານ ຂອງວິສາຫະກິດໃດໜຶ່ງ;
4. ບໍ່ເຄີຍຖືກລົງວິໄນ ຫຼື ຖືກສານຕັດສິນລົງໂທດ ໃນສະຖານສໍ້ໂກງ ຫຼື ກ່ຽວກັບການກະທຳຜິດດ້ານການເງິນ, ການບັນຊີ;

5. ມີພະນັກງານວິຊາການດ້ານການບັນຊີ, ການເງິນ ລະດັບຊັ້ນສູງຂຶ້ນໄປ ຢ່າງໜ້ອຍ ສາມຄົນ.

**ມາດຕາ 42 ການອອກອະນຸຍາດດຳເນີນວິສາຫະກິດບັນຊີ**

ກະຊວງການເງິນ ຈະພິຈາລະນາອອກໃບອະນຸຍາດໃຫ້ດຳເນີນວິສາຫະກິດບັນຊີ ພາຍໃນກຳນົດ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບສຳນວນຄຳຮ້ອງຂອງຜູ້ຮ້ອງຂໍ ຈາກຂະແໜງການອຸດສາຫະກຳ ແລະ ການຄ້າ ເປັນຕົ້ນໄປ ເມື່ອເຫັນວ່າມີເງື່ອນໄຂຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 40 ແລະ 41 ຂອງກົດໝາຍສະບັບນີ້.

ພາຍຫຼັງ ບຸກຄົນ ຫຼື ນິຕິບຸກຄົນ ໄດ້ຮັບອະນຸຍາດ ໃຫ້ດຳເນີນວິສາຫະກິດບັນຊີ ຈາກຂະແໜງການ ການເງິນ ແລະ ໄດ້ໃບທະບຽນວິສາຫະກິດ ຈາກຂະແໜງການອຸດສາຫະກຳ ແລະ ການຄ້າແລ້ວ ຕ້ອງໄປຈົດທະບຽນເປັນສະມາຊິກນິຕິບຸກຄົນ ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ.

ໃນກໍລະນີບໍ່ອອກໃບອະນຸຍາດດຳເນີນທຸລະກິດນັ້ນ ຂະແໜງການການເງິນ ຕ້ອງແຈ້ງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນໃຫ້ແກ່ຜູ້ຮ້ອງຂໍ.

**ມາດຕາ 43 ເງື່ອນໄຂການຂໍອະນຸຍາດດຳເນີນວິສາຫະກິດກວດສອບ**

ຜູ້ມີຈຸດປະສົງຂໍອະນຸຍາດດຳເນີນວິສາຫະກິດກວດສອບ ຕ້ອງມີເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ເປັນນັກຊ່ຽວຊານບັນຊີ ຫຼື ວິສາຫະກິດກວດສອບຕ່າງປະເທດ;
2. ເປັນສະມາຊິກຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ;
3. ບໍ່ເປັນລັດຖະກອນ, ບໍ່ເປັນເຈົ້າຂອງ, ບໍ່ເປັນຂາຮຸ້ນ ຫຼື ພະນັກງານ ຂອງວິສາຫະກິດໃດໜຶ່ງ;
4. ບໍ່ເຄີຍຖືກລົງວິໄນ ຫຼື ຖືກສານຕັດສິນລົງໂທດ ໃນສະຖານສໍ້ໂກງ ຫຼື ກ່ຽວກັບການກະທຳຜິດດ້ານການເງິນ, ການບັນຊີ;
5. ມີນັກຊ່ຽວຊານບັນຊີ ຢ່າງໜ້ອຍ ສອງຄົນຂຶ້ນໄປ ແລະ ພະນັກງານລະດັບຊັ້ນສູງຂຶ້ນໄປກໍລະນີວິສາຫະກິດສ່ວນບຸກຄົນ;
6. ມີຂາຮຸ້ນ ຢ່າງໜ້ອຍສາມສ່ວນຫ້າ ຂອງຜູ້ຖືຮຸ້ນທັງໝົດ ເປັນນັກຊ່ຽວຊານບັນຊີ ແລະ ເປັນຜູ້ບໍລິຫານ ແລະ ພະນັກງານລະດັບຊັ້ນສູງຂຶ້ນໄປ ກໍລະນີມີຂາຮຸ້ນສອງຄົນຂຶ້ນໄປ.

**ມາດຕາ 44 ການອະນຸຍາດດຳເນີນວິສາຫະກິດກວດສອບ**

ການອະນຸຍາດດຳເນີນວິສາຫະກິດກວດສອບ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 40 ແລະ 43 ຂອງກົດໝາຍສະບັບນີ້.

ພາຍຫຼັງໄດ້ຮັບອະນຸຍາດດຳເນີນວິສາຫະກິດກວດສອບ ແລະ ໄດ້ຂຶ້ນທະບຽນວິສາຫະກິດແລ້ວ ພາຍໃນກຳນົດເວລາ ສາມສິບວັນ ຜູ້ອຳນວຍການ ຫຼື ຜູ້ຮຸ້ນສ່ວນຮັບຜິດຊອບງານ ຕ້ອງໄດ້ຮັບອະນຸຍາດເປັນນັກກວດສອບຕາມກົດໝາຍ ຈາກກະຊວງການເງິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 52, 53 ແລະ 54 ຂອງກົດໝາຍສະບັບນີ້.

### ມາດຕາ 45 ການສ້າງຕັ້ງສາຂາ ຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ

ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ສາມາດສ້າງຕັ້ງສາຂາຂອງຕົນ ພາຍໃຕ້ເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 40, 41 ແລະ 43 ຂອງກົດໝາຍສະບັບນີ້.

ກໍລະນີ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຖືກໂຈະ, ຖືກຖອນໃບອະນຸຍາດ ຫຼື ຖືກຍຸບເລີກວິສາຫະກິດນັ້ນ ສາຂາ ກໍຈະຖືກໂຈະ, ຖືກຖອນໃບອະນຸຍາດ ຫຼື ຖືກຍຸບເລີກວິສາຫະກິດເຊັ່ນດຽວກັນ.

### ມາດຕາ 46 ການໂຈະການເຄື່ອນໄຫວຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ

ການເຄື່ອນໄຫວຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຈະຖືກໂຈະໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີ ຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບເອງ;
2. ລະເມີດກົດໝາຍສະບັບນີ້ ຫຼື ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ;
3. ບໍ່ລາຍງານ ກ່ຽວກັບການເຄື່ອນໄຫວຂອງຕົນໃຫ້ກະຊວງການເງິນ ສອງປີ ຕິດຕໍ່ກັນ;
4. ບໍ່ປະກັນໄພຄ່າເສັຍຫາຍດ້ານວິຊາຊີບ ສຳລັບວິສາຫະກິດກວດສອບ;
5. ຖືກດຳເນີນຄະດີ ກ່ຽວກັບການເຄື່ອນໄຫວດ້ານວິຊາຊີບ;
6. ບໍ່ປະຕິບັດພັນທະ ຕໍ່ລັດ ແລະ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ.

ກະຊວງການເງິນ ຈະໂຈະການເຄື່ອນໄຫວຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ພາຍຫຼັງທີ່ໄດ້ມີການກ່າວເຕືອນເປັນລາຍລັກອັກສອນ ເວັ້ນເສັຍແຕ່ກໍລະນີ ທີ່ວິສາຫະກິດຫາກສະເໜີຂໍໂຈະເອງ.

ພາຍຫຼັງຖືກສັ່ງໂຈະແລ້ວ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຕ້ອງປັບປຸງຂໍ້ຄົງຄ້າງທີ່ເປັນສາເຫດຂອງການສັ່ງໂຈະ ພາຍໃນກຳນົດເວລາທີ່ກະຊວງການເງິນກຳນົດໄວ້.

### ມາດຕາ 47 ການຖອນໃບອະນຸຍາດດຳເນີນທຸລະກິດ ຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ

ກະຊວງການເງິນ ຖອນໃບອະນຸຍາດດຳເນີນທຸລະກິດ ຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີ ຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບເອງ;
2. ບໍ່ປັບປຸງແກ້ໄຂຂໍ້ຄົງຄ້າງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 46 ຂອງກົດໝາຍສະບັບນີ້;
3. ບໍ່ປະຕິບັດຕາມເງື່ອນໄຂການຂໍອະນຸຍາດດຳເນີນວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 41 ຫຼື 43 ຂອງກົດໝາຍສະບັບນີ້;
4. ມີຄຳຕັດສິນຂອງສານປະຊາຊົນ ໃຫ້ຢຸດເຊົາການດຳເນີນວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ;
5. ສືບຕໍ່ດຳເນີນການເຄື່ອນໄຫວວິຊາຊີບ ໃນໄລຍະເວລາຖືກສັ່ງໂຈະ.

ກະຊວງການເງິນ ຕ້ອງແຈ້ງການຖອນໃບອະນຸຍາດດຳເນີນທຸລະກິດຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ເປັນລາຍລັກອັກສອນ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຖອນ

ໃບທະບຽນວິສາຫະກິດ ພ້ອມກັນນັ້ນກໍຕ້ອງແຈ້ງໃຫ້ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ, ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ, ຂະແໜງການສ່ວຍສາອາກອນ, ພາກສ່ວນອື່ນທີ່ກ່ຽວຂ້ອງຮັບຊາບ ແລະ ແຈ້ງຕໍ່ສາຫາລະນະຊົນຜ່ານສື່ມວນຊົນ.

ການຖອນໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຖືວ່າເປັນການຍຸບເລີກວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ.

## ໝວດທີ 2
## ການເຄື່ອນໄຫວວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ

### ມາດຕາ 48 ຂອບເຂດການບໍລິການຂອງວິສາຫະກິດບັນຊີ

ວິສາຫະກິດບັນຊີ ສາມາດເຄື່ອນໄຫວໃຫ້ການບໍລິການວຽກງານບັນຊີ ໃຫ້ຖືກຕ້ອງຕາມກົດໝາຍສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ດັ່ງນີ້:

1. ໃຫ້ການແນະນຳໃນການຈັດວາງລະບົບບັນຊີ, ໃນການຖືບັນຊີ ແລະ ໃນການສ້າງເອກະສານ ລາຍງານການເງິນ;
2. ໃຫ້ຄຳປຶກສາດ້ານການບັນຊີ ແລະ ລະບຽບກົດໝາຍ ກ່ຽວກັບການບັນຊີ;
3. ໃຫ້ຄຳປຶກສາດ້ານການບໍລິຫານຄຸ້ມຄອງ;
4. ຈັດຝຶກອົບຮົມໄລຍະສັ້ນ ກ່ຽວກັບບັນຊີ;
5. ໃຫ້ການບໍລິການອື່ນທີ່ກ່ຽວຂ້ອງກັບວຽກງານບັນຊີ.

### ມາດຕາ 49 ຂອບເຂດການເຄື່ອນໄຫວວິສາຫະກິດກວດສອບ

ວິສາຫະກິດກວດສອບ ສາມາດໃຫ້ບໍລິການດ້ານການກວດສອບ ໃຫ້ຖືກຕ້ອງຕາມກົດໝາຍສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ດັ່ງນີ້:

1. ກວດສອບເອກະສານລາຍງານການເງິນ;
2. ທົບທວນຄືນເອກະສານລາຍງານການເງິນ;
3. ກວດສອບຂໍ້ມູນຂ່າວສານການເງິນອະນາຄົດ ແລະ ຂໍ້ມູນຂ່າວສານທີ່ບໍ່ແມ່ນການເງິນ;
4. ໃຫ້ການບໍລິການອື່ນທີ່ກ່ຽວຂ້ອງກັບວຽກງານກວດສອບ.

ນອກຈາກນີ້ ວິສາຫະກິດກວດສອບ ຍັງສາມາດໃຫ້ບໍລິການວຽກງານ ຕາມທີ່ໄດ້ກຳນົດໃນມາດຕາ 48 ຂອງກົດໝາຍສະບັບນີ້.

## ໝວດທີ 3
## ສິດ ແລະ ພັນທະຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ

**ມາດຕາ 50 ສິດ ແລະ ພັນທະ ຂອງວິສາຫະກິດບັນຊີ**

ວິສາຫະກິດບັນຊີ ມີ ສິດ ແລະ ພັນທະ ດັ່ງນີ້:

1. ປະຕິບັດຈັນຍາບັນສໍາລັບນັກວິຊາຊີບການບັນຊີ;
2. ໃຫ້ບໍລິການບັນຊີ ຕໍ່ຫົວໜ່ວຍຖືບັນຊີ ຢ່າງຖືກຕ້ອງຕາມລະບຽບກົດໝາຍ;
3. ຮັກສາຄວາມລັບດ້ານວິຊາຊີບ;
4. ໃຫ້ຄວາມຮ່ວມມື ກັບເຈົ້າໜ້າທີ່ບັນຊີ ຫຼື ພະນັກງານຂອງລັດ ທີ່ກ່ຽວຂ້ອງ;
5. ຮັບຄ່າບໍລິການດ້ານວິຊາຊີບຈາກລູກຄ້າ;
6. ລາຍງານຜົນການເຄື່ອນໄຫວ, ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ໃຫ້ກະຊວງການເງິນເປັນປະຈໍາປີ;
7. ຍົກລະດັບການສຶກສາດ້ານວິຊາຊີບ ໃຫ້ແກ່ພະນັກງານໃນວິສາຫະກິດ ຢ່າງເປັນລະບົບ ແລະ ຕໍ່ເນື່ອງ;
8. ມີລະບົບຮັບປະກັນການຄວບຄຸມຄຸນນະພາບ ໂດຍສອດຄ່ອງກັບມາດຕະຖານວິຊາຊີບດ້ານການກວດສອບ;
9. ປະກອບສ່ວນໃນການພັດທະນາວິຊາຊີບບັນຊີ ແລະ ກວດສອບ ໃນ ສປປ ລາວ;
10. ນໍາໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 51 ສິດ ແລະ ພັນທະ ຂອງວິສາຫະກິດກວດສອບ**

ວິສາຫະກິດກວດສອບ ມີ ສິດ ແລະ ພັນທະ ດັ່ງນີ້:

1. ນໍາໃຊ້ສິດ ແລະ ປະຕິບັດພັນທະ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 50 ຂອງກົດໝາຍສະບັບນີ້;
2. ເຮັດປະກັນໄພຄ່າເສັຍຫາຍດ້ານວິຊາຊີບ;
3. ສະເໜີໃຫ້ເປົ້າໝາຍຖືກກວດສອບ, ບຸກຄົນ ສະໜອງຂໍ້ມູນທີ່ກ່ຽວຂ້ອງກັບການກວດສອບ;
4. ມີຄວາມເປັນເອກະລາດ ໃນການດໍາເນີນການກວດສອບ;
5. ກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງ ຂອງການເຄື່ອນໄຫວ, ຂໍ້ມູນ ແລະ ເອກະສານດ້ານເສດຖະກິດການເງິນ ທັງພາຍໃນ ແລະ ພາຍນອກ ໃນໄລຍະການດໍາເນີນການກວດສອບຂອງເປົ້າໝາຍຖືກກວດສອບ ແລະ ລົງລາຍເຊັນໃສ່ບົດລາຍງານການກວດສອບ;
6. ເປັນເຄືອຂ່າຍວິຊາຊີບກວດສອບໃດໜຶ່ງ;
7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການກວດສອບ;

8. ລາຍງານຄ່າບໍລິການການກວດສອບ ແລະ ການບໍລິການອື່ນ ທີ່ກ່ຽວຂ້ອງກັບການກວດສອບ ໃນເວລາດຳເນີນການກວດສອບໃຫ້ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ແລະ ກະຊວງການເງິນ;

9. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ພາກທີ V
## ນັກກວດສອບຕາມກົດໝາຍ

### ມາດຕາ 52 ເງື່ອນໄຂ ຂອງນັກກວດສອບຕາມກົດໝາຍ

ບຸກຄົນທີ່ຈະເປັນນັກກວດສອບຕາມກົດໝາຍ ຕ້ອງເປັນນັກຊ່ຽວຊານບັນຊີ ມີຕຳແໜ່ງເປັນຜູ້ອຳນວຍການ ຫຼື ຜູ້ຮຸ້ນສ່ວນຮັບຜິດຊອບງານ ຂອງວິສາຫະກິດກວດສອບ.

### ມາດຕາ 53 ການຍື່ນຄຳຮ້ອງຂໍເປັນນັກກວດສອບຕາມກົດໝາຍ

ນັກກວດສອບ ທີ່ຕ້ອງການເປັນນັກກວດສອບຕາມກົດໝາຍ ຕ້ອງຍື່ນຄຳຮ້ອງ ພ້ອມດ້ວຍເອກະສານປະກອບ ດັ່ງນີ້:

1. ໃບສະເໜີຂໍອະນຸຍາດເປັນນັກກວດສອບຕາມກົດໝາຍ;
2. ສຳເນົາໃບຢັ້ງຢືນນັກຊ່ຽວຊານບັນຊີ;
3. ສຳເນົາໃບຢັ້ງຢືນເປັນສະມາຊິກ ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ;
4. ໜັງສືຢັ້ງຢືນການເປັນຜູ້ອຳນວຍການ ຫຼື ຜູ້ຮຸ້ນສ່ວນຮັບຜິດຊອບງານ ຈາກວິສາຫະກິດກວດສອບ ທີ່ຕົນສັງກັດຢູ່;
5. ສຳເນົາໃບອະນຸຍາດດຳເນີນທຸລະກິດ ຂອງວິສາຫະກິດກວດສອບ ທີ່ຕົນສັງກັດຢູ່;
6. ເອກະສານອື່ນ ທີ່ກະຊວງການເງິນກຳນົດອອກ.

### ມາດຕາ 54 ການອະນຸຍາດເປັນນັກກວດສອບຕາມກົດໝາຍ

ກະຊວງການເງິນ ພິຈາລະນາ ອະນຸຍາດເປັນນັກກວດສອບຕາມກົດໝາຍ ພາຍໃນກຳນົດສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບສຳນວນຄຳຮ້ອງຂໍ ເປັນຕົ້ນໄປ ເມື່ອເຫັນວ່າຖືກຕ້ອງ ຄົບຖ້ວນຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 52 ແລະ 53 ຂອງກົດໝາຍສະບັບນີ້.

ໃນກໍລະນີບໍ່ອະນຸຍາດໃຫ້ເປັນນັກກວດສອບຕາມກົດໝາຍໄດ້ນັ້ນ ກະຊວງການເງິນ ຕ້ອງແຈ້ງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ ໃຫ້ຜູ້ຮ້ອງຂໍ.

**ມາດຕາ 55 ການໂຈະການເປັນນັກກວດສອບຕາມກົດໝາຍ**

ໃນກໍລະນີທີ່ວິສາຫະກິດກວດສອບ ຖືກໂຈະການເຄື່ອນໄຫວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 46 ຂອງກົດໝາຍສະບັບນີ້ ນັກກວດສອບຕາມກົດໝາຍ ທີ່ສັງກັດຢູ່ໃນວິສາຫະກິດດັ່ງກ່າວ ກໍຖືກໂຈະເຊັ່ນດຽວກັນ.

ການໂຈະດັ່ງກ່າວຈະຖືກຍົກເລີກ ເມື່ອເຫັນວ່ານັກກວດສອບຕາມກົດໝາຍ ຫຼື ວິສາຫະກິດກວດສອບ ໄດ້ມີການປັບປຸງແກ້ໄຂບັນຫາທີ່ຖືກໂຈະ ຕາມເວລາທີ່ໄດ້ກຳນົດໄວ້.

**ມາດຕາ 56 ການຖອນໃບອະນຸຍາດ ເປັນນັກກວດສອບຕາມກົດໝາຍ**

ນັກກວດສອບຕາມກົດໝາຍ ຈະຖືກຖອນໃບອະນຸຍາດເປັນນັກກວດສອບຕາມກົດໝາຍ ໃນກໍລະນີວິສາຫະກິດກວດສອບທີ່ຕົນສັງກັດນັ້ນ ຖືກຖອນໃບອະນຸຍາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 47 ຂອງກົດໝາຍສະບັບນີ້.

ກະຊວງການເງິນ ແຈ້ງເປັນລາຍລັກອັກສອນໃຫ້ນັກກວດສອບຕາມກົດໝາຍ ແລະ ວິສາຫະກິດກວດສອບ, ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ແລະ ແຈ້ງຕໍ່ສາທາລະນະຊົນຜ່ານສື່ມວນຊົນພາຍຫຼັງຖືກຖອນໃບອະນຸຍາດ.

**ມາດຕາ 57 ສິດ ແລະ ພັນທະ ຂອງນັກກວດສອບຕາມກົດໝາຍ**

ນັກກວດສອບຕາມກົດໝາຍ ມີ ສິດ ແລະ ພັນທະ ດັ່ງນີ້:

1. ດຳເນີນການກວດສອບ ເປົ້າໝາຍຖືກກວດສອບຕາມກົດໝາຍ ຕະຫຼອດປີການບັນຊີ;
2. ເຂົ້າເຖິງຂໍ້ມູນ ຂ່າວສານທີ່ກ່ຽວຂ້ອງກັບການກວດສອບທັງໝົດ ຂອງເປົ້າໝາຍຖືກກວດສອບຕາມກົດໝາຍ ລວມທັງບໍລິສັດໃນກຸ່ມ;
3. ຂໍຄຳອະທິບາຍ ຊີ້ແຈງ ຈາກຄະນະຜູ້ບໍລິຫານ, ຜູ້ຈັດການ, ພະນັກງານ ຫຼື ຄູ່ສັນຍາຂອງເປົ້າໝາຍຖືກກວດສອບຕາມກົດໝາຍ ຊຶ່ງເຫັນວ່າເປັນສິ່ງຈຳເປັນເພີ່ມເຕີມ ສຳລັບການປະຕິບັດໜ້າທີ່ຂອງຕົນ;
4. ກວດກາເອກະສານດ້ານບັນຊີ, ຄວາມຄົບຖ້ວນ, ຖືກຕ້ອງ ແລະ ການປະເມີນອົງປະກອບຂອງເອກະສານລາຍງານການເງິນ ຂອງເປົ້າໝາຍຖືກກວດສອບຕາມກົດໝາຍ;
5. ນຳໃຊ້ນັກຊ່ຽວຊານສະເພາະດ້ານໃດໜຶ່ງ ແລະ ພະນັກງານວິຊາການ ໃຫ້ການຊ່ວຍເຫຼືອ ຫຼື ເປັນຕົວແທນ ເພື່ອດຳເນີນການກວດສອບ ພາຍໃຕ້ຄວາມຮັບຜິດຊອບຂອງຕົນ.
6. ຮັບຜິດຊອບຢ່າງເຕັມສ່ວນ ຕໍ່ບົດລາຍງານການກວດສອບເອກະສານລາຍງານການເງິນປະຈຳປີ ລວມທັງເອກະສານລາຍງານການເງິນລວມກິດຈະການ ແລະ ສະເພາະກິດຈະການ ໃນກໍລະນີມີການກວດສອບເອກະສານລາຍງານການເງິນ ຂອງກຸ່ມບໍລິສັດ.

# ພາກທີ VI
# ເປົ້າໝາຍຖືກກວດສອບ

**ມາດຕາ 58 ເປົ້າໝາຍຖືກກວດສອບ**

ເປົ້າໝາຍຖືກກວດສອບ ມີ ດັ່ງນີ້:

1. ເປົ້າໝາຍຖືກສອບຕາມກົດໝາຍ;
2. ເປົ້າໝາຍຖືກກວດສອບຕາມຄວາມສະໝັກໃຈ.

**ມາດຕາ 59 ເປົ້າໝາຍຖືກກວດສອບຕາມກົດໝາຍ**

ເປົ້າໝາຍຖືກກວດສອບຕາມກົດໝາຍ ແມ່ນ ຫົວໜ່ວຍ ແລະ ການຈັດຕັ້ງ ຊຶ່ງເອກະສານລາຍງານການເງິນປະຈຳປີ ຂອງຕົນ ຕ້ອງໄດ້ຮັບການກວດສອບ ຈາກວິສາຫະກິດກວດສອບ ບົນພື້ນຖານສັນຍາ ດັ່ງນີ້:

1. ວິສາຫະກິດລົງທຶນຕ່າງປະເທດ;
2. ທະນາຄານ ແລະ ສະຖາບັນການເງິນອື່ນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ;
3. ບໍລິສັດປະກັນໄພ ແລະ ບໍລິສັດຕົວແທນປະກັນໄພ;
4. ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ ແລະ ບໍລິສັດມະຫາຊົນ;
5. ລັດວິສາຫະກິດ;
6. ໂຄງການກູ້ຢືມ ແລະ ຊ່ວຍເຫຼືອລ້າ ຈາກຕ່າງປະເທດ ຫຼື ອົງການຈັດຕັ້ງສາກົນ;
7. ວິສາຫະກິດ ທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 60 ເປົ້າໝາຍຖືກກວດສອບຕາມຄວາມສະໝັກໃຈ**

ເປົ້າໝາຍຖືກກວດສອບຕາມຄວາມສະໝັກໃຈ ແມ່ນ ຫົວໜ່ວຍ ແລະ ການຈັດຕັ້ງ ທີ່ບໍ່ໄດ້ບັງຄັບ ໃຫ້ຖືກກວດສອບ ແຕ່ມີຈຸດປະສົງໃຫ້ມີການກວດສອບເອກະສານລາຍງານການເງິນຂອງຕົນບົນພື້ນຖານສັນຍາທີ່ໄດ້ຕົກລົງຮ່ວມກັນກັບວິສາຫະກິດກວດສອບ.

**ມາດຕາ 61 ສິດຂອງເປົ້າໝາຍຖືກກວດສອບ**

ເປົ້າໝາຍຖືກກວດສອບ ມີ ສິດ ດັ່ງນີ້:

1. ຄັດເລືອກ ແລະ ຕົກລົງຮັບເອົາວິສາຫະກິດກວດສອບໜຶ່ງ ຫຼື ຫຼາຍວິສາຫະກິດ ເພື່ອກວດສອບເອກະສານລາຍງານການເງິນຂອງຕົນ;
2. ສະເໜີ ໃຫ້ວິສາຫະກິດກວດສອບ ສະໜອງຂໍ້ມູນ ຂ່າວສານທີ່ຈຳເປັນ ກ່ຽວກັບວິສາຫະກິດ ແລະ ນັກກວດສອບຕາມກົດໝາຍ;

3. ສະເໜີ ໃຫ້ປ່ຽນແທນສະມາຊິກໃນໜ່ວຍງານກວດສອບ ຫຼື ນັກກວດສອບຕາມກົດໝາຍ ໃນກໍລະນີ ບໍ່ສາມາດດໍາເນີນວຽກງານກວດສອບ ຫຼື ລະເມີດກົດໝາຍສະບັບນີ້;

4. ປະຕິເສດການສະໜອງຂໍ້ມູນ ຂ່າວສານ ທີ່ບໍ່ກ່ຽວຂ້ອງກັບການກວດສອບອິດສະລະ;

5. ປຶກສາຫາລື, ອະທິບາຍ ຢ່າງເປັນລາຍລັກອັກສອນ ກ່ຽວກັບປະເດັນທີ່ໄດ້ຍົກຂຶ້ນໃນຮ່າງບົດລາຍງານການກວດສອບ ຕາມຄວາມເໝາະສົມ;

6. ທວງໃຫ້ວິສາຫະກິດກວດສອບ ຈ່າຍທົດແທນຄ່າເສັຍຫາຍ ໃນກໍລະນີຜູ້ກວດສອບລະເມີດສັນຍາ ຫຼື ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ທີ່ໄດ້ສ້າງຜົນເສັຍຫາຍໃຫ້ແກ່ຕົນ;

7. ສະເໜີ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ແລະ ກະຊວງການເງິນ ກໍລະນີມີຄວາມເຫັນທີ່ບໍ່ເອກະພາບກັນຕໍ່ຂໍ້ສະຫຼຸບ ແລະ ການໃຫ້ຄໍາເຫັນຂອງນັກກວດສອບຕາມກົດໝາຍ;

8. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 62 ພັນທະຂອງເປົ້າໝາຍຖືກກວດສອບ**

ເປົ້າໝາຍຖືກກວດສອບ ມີ ພັນທະ ດັ່ງນີ້:

1. ປະຕິບັດຕາມເນື້ອໃນ ຂອງສັນຍາກວດສອບຢ່າງເຂັ້ມງວດ;

2. ສະໜອງຂໍ້ມູນ ຂ່າວສານ ຢ່າງຖືກຕ້ອງ, ຄົບຖ້ວນ, ມີຈິງ, ທັນການ ຕາມການສະເໜີຂອງນັກກວດສອບຕາມກົດໝາຍ ແລະ ສະມາຊິກໃນໜ່ວຍງານກວດສອບ;

3. ໃຫ້ການຮ່ວມມື ແລະ ອໍານວຍຄວາມສະດວກ ໃຫ້ໜ່ວຍງານກວດສອບ ສາມາດດໍາເນີນວຽກງານກວດສອບອິດສະລະ;

4. ຫຼີກລ່ຽງການກະທໍາໃດໜຶ່ງ ທີ່ຈໍາກັດຂອບເຂດໃນການດໍາເນີນງານ ຂອງນັກກວດສອບ;

5. ປັບປຸງ, ແກ້ໄຂຂໍ້ຄົງຄ້າງ ແລະ ຂໍ້ຜິດພາດ ໃນເອກະສານລາຍງານການເງິນ ໃຫ້ຖືກຕ້ອງ ຕາມການແນະນໍາ ຂອງວິສາຫະກິດກວດສອບ;

6. ສົ່ງບົດລາຍງານການກວດສອບ ໃຫ້ອົງການທີ່ກ່ຽວຂ້ອງ ຕາມລະບຽບກົດໝາຍ;

7. ຊໍາລະຄ່າບໍລິການກວດສອບ ໃຫ້ຖືກຕ້ອງຕາມສັນຍາ;

8. ປະຕິບັດພັນທະອື່ນ ແລະ ມີຄວາມຮັບຜິດຊອບຕໍ່ໜ້າກົດໝາຍ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

## ພາກທີ VII
## ການລາຍງານ ແລະ ການຮັກສາຂໍ້ມູນ

**ມາດຕາ 63 ການລາຍງານ**

ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຕ້ອງລາຍງານຜົນການດໍາເນີນງານ ໃຫ້ກະຊວງການເງິນ ຢ່າງເປັນປົກກະຕິ ພາຍໃນກໍານົດເວລາ ເກົ້າສິບວັນ ນັບແຕ່ວັນປິດບັນຊີປະຈໍາປີ, ການລາຍງານ ຕ້ອງປະກອບດ້ວຍເອກະສານຕົ້ນຕໍ ດັ່ງນີ້:

1. ຜົນການເຄື່ອນໄຫວວຽກງານປະຈຳປີ, ໂຄງປະກອບການຈັດຕັ້ງ, ອັດຕາສ່ວນພະນັກງານວິຊາການຂອງຕົນ ແລະ ການປະຕິບັດພັນທະ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ທີ 6 ມາດຕາ 50 ຂອງກົດໝາຍສະບັບນີ້;

2. ເອກະສານລາຍງານການເງິນປະຈຳປີ;

3. ການປະກັນໄພຄ່າເສັຍຫາຍດ້ານວິຊາຊີບ;

4. ການຍົກລະດັບການສຶກສາດ້ານວິຊາຊີບ ໃຫ້ພະນັກງານໃນວິສາຫະກິດຂອງຕົນ;

5. ບົດລາຍງານຄວາມໂປ່ງໃສ.

### ມາດຕາ 64 ການຮັກສາຂໍ້ມູນ

ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຕ້ອງເກັບຮັກສາເອກະສານທີ່ສຳຄັນ ກ່ຽວຂ້ອງກັບວຽກງານກວດສອບອິດສະລະ ແລະ ວຽກງານທີ່ຕິດພັນກັບການກວດສອບໄວ້ເປັນຢ່າງດີ ຢ່າງໜ້ອຍເປັນເວລາ ສິບປີ.

ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຕ້ອງກຳນົດລະບຽບ ແລະ ວິທີການທີ່ຈຳເປັນເພື່ອເກັບຮັກສາຂໍ້ມູນ ແລະ ເອກະສານທີ່ຕິດພັນກັບການກວດສອບ ໃຫ້ປອດໄພ, ຄົບຖ້ວນ ແລະເປັນຄວາມລັບ.

## ພາກທີ VIII
## ສະພາວິຊາຊີບນັກບັນຊີ ແລະນັກກວດສອບ

### ມາດຕາ 65 ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ

ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ແມ່ນ ການຈັດຕັ້ງວິຊາຊີບນັກບັນຊີ ແລະນັກກວດສອບ ທີ່ສ້າງຕັ້ງຂຶ້ນ ໂດຍກະຊວງການເງິນ, ມີພາລະບົດບາດ ໃນການປະກອບຄຳເຫັນໃຫ້ແກ່ລັດ, ບຸກລະດົມຂົນຂວາຍ, ນຳພາ, ເຕົ້າໂຮມສະມາຊິກ ລວມທັງປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງນັກບັນຊີ ແລະ ນັກກວດສອບ ໃຫ້ເຄື່ອນໄຫວວິຊາຊີບຖືກຕ້ອງຕາມລະບຽບກົດໝາຍ, ຊ່ວຍອົງການຂອງລັດ ໃນການສົ່ງເສີມ, ພັດທະນາ ແລະ ຍົກລະດັບວິຊາຊີບການບັນຊີ ແລະ ການກວດສອບ.

ສຳລັບ ໂຄງປະກອບການຈັດຕັ້ງ, ບຸກຄະລາກອນ ແລະ ກົດລະບຽບຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 66 ສິດ ແລະ ໜ້າທີ່ ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ

ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງແຜນການເຄື່ອນໄຫວ ແລະ ແຜນງົບປະມານ ປະຈຳ ເດືອນ, ງວດ ແລະ ປີ;

2. ຄົ້ນຄວ້າ, ສ້າງ ລະບຽບການຄຸ້ມຄອງພາຍໃນ ແລະ ປະກອບສ່ວນຄົ້ນຄວ້າ ຈັນຍາບັນສຳລັບນັກວິຊາຊີບການບັນຊີ ແລະ ການກວດສອບ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ;

3. ຈັດຝຶກອົບຮົມ, ຍົກລະດັບ ຄວາມຮູ້ດ້ານວິຊາຊີບການບັນຊີ ແລະ ການກວດສອບ ຕາມເນື້ອໃນ, ໂຄງການ, ແຜນງານ ແລະ ຫຼັກສູດທີ່ກ່ຽວຂ້ອງ;

4. ປະສານສົມທົບ, ປຶກສາຫາລື, ແລກປ່ຽນຄຳເຫັນ ແລະ ຖອດຖອນບົດຮຽນ ກ່ຽວກັບວິຊາຊີບການບັນຊີ ແລະ ການກວດສອບ;

5. ຮ່ວມມືກັບອົງການຈັດຕັ້ງ ແລະ ສະຖາບັນວິຊາຊີບການບັນຊີຂອງບັນດາປະເທດພາກພື້ນ ແລະ ສາກົນ ຕາມການເຫັນດີຂອງກະຊວງການເງິນ;

6. ຕິດຕາມ ກວດກາການເຄື່ອນໄຫວຂອງສະມາຊິກຂອງຕົນ;

7. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານ ແລະ ການປະຕິບັດແຜນງົບປະມານ ຕໍ່ກະຊວງການເງິນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມລະບຽບກົດໝາຍ.

## ພາກທີ IX
## ຂໍ້ຫ້າມ

### ມາດຕາ 67 ຂໍ້ຫ້າມສຳລັບວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ

ຫ້າມ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ມີ ພຶດຕິກຳ ດັ່ງນີ້:

1. ແຕ່ງຕັ້ງບຸກຄົນ ທີ່ເຄີຍເປັນສະມາຊິກສະພາບໍລິຫານ, ຜູ້ບໍລິຫານ ຫຼື ພະນັກງານຂອງນິຕິບຸກຄົນ ຫຼື ວິສາຫະກິດ ແລະ ໄດ້ຢຸດເຊົາໜ້າທີ່ວຽກງານດັ່ງກ່າວ ເປັນເວລາຢ່າງໜ້ອຍ ສາມປີ ເປັນນັກກວດສອບຕາມກົດໝາຍ ຂອງນິຕິບຸກຄົນ ຫຼື ວິສາຫະກິດດັ່ງກ່າວ;

2. ປອມແປງ ຊີວະປະຫວັດຂອງພະນັກງານ ແລະ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ;

3. ດຳເນີນການກວດສອບ ວິສາຫະກິດທີ່ຕົນເອງໃຫ້ບໍລິການດ້ານການບັນຊີ;

4. ຍົກເລີກສັນຍາກວດສອບແຕ່ຝ່າຍດຽວ ໂດຍບໍ່ມີເຫດຜົນ;

5. ປະພຶດ ແລະ ການພົວພັນກັບລູກຄ້າທີ່ກໍ່ໃຫ້ເກີດຄວາມເສຍຫາຍ ແລະ ເສຍຊື່ສຽງດ້ານວິຊາຊີບ;

6. ຄິດໄລ່ ແລະ ຮັບຄ່າບໍລິການທີ່ບໍ່ສົມສ່ວນກັບຂອບເຂດວຽກງານທີ່ໄດ້ປະຕິບັດ;

7. ທຳລາຍຂໍ້ມູນຫຼັກຖານ, ປອມແປງ ເຊື່ອງອຳຂໍ້ມູນ ແລະ ເອກະສານ, ຊຸກເຊື່ອງການກະທຳຜິດ ທີ່ຕິດພັນກັບວຽກງານບັນຊີ ແລະ ກວດສອບ;

8. ໃຫ້ສິນບົນ, ຄ່າຈ້າງລາງວັນ, ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ຂອງລັດ ໃນການບິດເບືອນ, ປອມແປງເອກະສານ ດ້ານການບັນຊີ ແລະ ການກວດສອບ ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ຫົວໜ່ວຍທີ່ຕົນບໍລິການໃຫ້;

9. ຫຼີກຫຼ່ຽງການລາຍງານ ການໃຫ້ບໍລິການດ້ານການບັນຊີ ແລະ ການກວດສອບໃຫ້ຂະແໜງການທີ່ມີໜ້າທີ່ຄຸ້ມຄອງ ແລະ ການກວດກາ;

10. ບໍລິການດ້ານບັນຊີ ແລະ ກວດສອບ ໃຫ້ຫົວໜ່ວຍຖືບັນຊີທີ່ບໍ່ຖືກຕ້ອງ ຕາມລະບຽບກົດໝາຍດ້ານການບັນຊີ ແລະ ການກວດສອບ;

11. ບໍລິການດ້ານບັນຊີ ແລະ ກວດສອບ ໃຫ້ວິສາຫະກິດ ທີ່ມີຍາດພີ່ນ້ອງໃກ້ຊິດ ເປັນຫົວໜ້າບັນຊີ ຫຼື ຜູ້ບໍລິຫານຂອງຫົວໜ່ວຍຖືບັນຊີ;

12. ຮຽກຮ້ອງ ຫຼື ຮັບຜົນປະໂຫຍດ ນອກຈາກທີ່ໄດ້ກໍານົດໄວ້ໃນສັນຍາກວດສອບ ຫຼື ພະຍາຍາມຮັບຜົນປະໂຫຍດອື່ນໃດໜຶ່ງ;

13. ປະຕິເສດການຮ່ວມມື ກັບເຈົ້າໜ້າທີ່ບັນຊີ ຫຼື ພະນັກງານຂອງລັດທີ່ກ່ຽວຂ້ອງ;

14. ນໍາໃຊ້ຂໍ້ມູນຂ່າວສານທີ່ໄດ້ຮັບກ່ຽວກັບການປະຕິບັດຂໍ້ຜູກພັນ ໄປໃນທາງທີ່ບໍ່ຖືກຕ້ອງ;

15. ອະນຸຍາດໃຫ້ບຸກຄົນດຽວກັນ ເປັນຜູ້ຈັດການສອງສາຂາ ຂຶ້ນໄປ;

16. ມີພຶດຕິກໍາອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 68 ຂໍ້ຫ້າມສໍາລັບ ນັກກວດສອບ**

ຫ້າມນັກກວດສອບ ມີ ພຶດຕິກໍາ ດັ່ງນີ້:

1. ເຄື່ອນໄຫວວຽກງານໃດໜຶ່ງ ທີ່ທໍາລາຍຊື່ສຽງດ້ານວິຊາຊີບການບັນຊີ ແລະ ການກວດສອບ;

2. ເຮັດວຽກ ໃຫ້ສອງ ຫຼື ຫຼາຍວິສາຫະກິດ ພ້ອມກັນ ສໍາລັບຜູ້ມີວຽກປະຈໍາບ່ອນໃດໜຶ່ງແລ້ວ ຫຼື ໃຫ້ບໍລິການດ້ານວິຊາຊີບການບັນຊີ ແລະ ການກວດສອບ ໂດຍບໍ່ໄດ້ຮັບອະນຸຍາດຈາກກະຊວງການເງິນ;

3. ດໍາເນີນວິຊາຊີບໃນສອງ ຫຼື ຫຼາຍວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຫຼື ດໍາເນີນວິຊາຊີບອື່ນ ຄຽງຄູ່ກັບວິຊາຊີບການບັນຊີ ແລະ ການກວດສອບ;

4. ໃຫ້ເຊົ່າ, ໃຫ້ຢືມ, ມອບໂອນ, ຂາຍ ໃບຢັ້ງຢືນນັກຊ່ຽວຊານບັນຊີຢ່າງເດັດຂາດ;

5. ຊື້-ຂາຍ ຮຸ້ນ, ພັນທະບັດ ຫຼື ຊັບສິນອື່ນ ຂອງເປົ້າໝາຍຖືກກວດສອບ ໃນເວລາດໍາເນີນການກວດສອບ;

6. ຂໍເອົາ, ທວງເອົາ, ຮັບ ສິນຈ້າງລາງວັນທີ່ບໍ່ຖືກຕ້ອງ, ສົມຮູ້ຮ່ວມຄິດກັບເປົ້າໝາຍຖືກກວດສອບ;

7. ຕົວະຍົວະ, ຫຼອກລວງ, ໂຄສະນາ ບອກເລົ່າ ຄວາມຮູ້ຄວາມສາມາດ ຫຼື ໃຊ້ວິທີທີ່ບໍ່ເໝາະສົມ ໃນການຊອກລູກຄ້າ;

8. ຊຸກເຊື່ອງ, ປອມແປງ ຫຼື ທໍາລາຍ ເອກະສານ ຫຼື ຂໍ້ມູນທີ່ກ່ຽວຂ້ອງ;

9. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບ ຂອງຫົວໜ່ວຍ ທີ່ຕົນໄດ້ໃຫ້ບໍລິການບັນຊີ;

10. ມີພຶດຕິກໍາອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

### ມາດຕາ 69 ຂໍ້ຫ້າມສຳລັບ ນັກຊ່ຽວຊານບັນຊີ

ຫ້າມ ນັກຊ່ຽວຊານບັນຊີ ມີ ພຶດຕິກຳ ດັ່ງນີ້:

1. ເຄື່ອນໄຫວວຽກງານໃດໜຶ່ງ ທີ່ທຳລາຍຊື່ສຽງດ້ານວິຊາຊີບການບັນຊີ ແລະ ການກວດສອບ;

2. ໃຫ້ເຊົ່າ, ໃຫ້ຢືມ, ມອບໂອນ, ຂາຍໃບຢັ້ງຢືນນັກຊ່ຽວຊານບັນຊີຢ່າງເດັດຂາດ;

3. ເຮັດວຽກ ໃຫ້ສອງ ຫຼື ຫຼາຍວິສາຫະກິດ ພ້ອມກັນ ສຳລັບຜູ້ມີວຽກປະຈຳບ່ອນໃດໜຶ່ງແລ້ວ ຫຼື ໃຫ້ບໍລິການດ້ານວິຊາຊີບການບັນຊີ ແລະ ການກວດສອບ ໂດຍບໍ່ໄດ້ຮັບອະນຸຍາດຈາກກະຊວງການເງິນ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

### ມາດຕາ 70 ຂໍ້ຫ້າມສຳລັບເປົ້າໝາຍຖືກກວດສອບ

ຫ້າມ ເປົ້າໝາຍຖືກກວດສອບ ມີ ພຶດຕິກຳ ດັ່ງນີ້:

1. ແຕ່ງຕັ້ງ ຫຼື ຮັບເອົານັກກວດສອບ ແລະ ຮຸ້ນສ່ວນຮັບຜິດຊອບງານ ທີ່ຢຸດເຊົາວຽກງານກວດສອບ ຫຼື ລາອອກຈາກວິສາຫະກິດກວດສອບ ພາຍໃນ ສາມປີ ແລະ ເຄີຍໄດ້ກວດສອບວິສາຫະກິດຂອງຕົນ ເປັນຜູ້ບໍລິຫານ, ເປັນພະນັກງານ ຂອງວິສາຫະກິດຕົນ ຫຼື ບໍລິສັດໃນກຸ່ມ ຫຼື ວິສາຫະກິດຮຸ້ນສ່ວນຂອງບໍລິສັດແມ່ ໃນກຸ່ມບໍລິສັດໃດໜຶ່ງ;

2. ກໍ່ຄວາມເສັຍຫາຍ ຕໍ່ຄວາມສັດຊື່ສຸດຈະລິດ ຂອງນັກຊ່ຽວຊານບັນຊີ ແລະນັກກວດສອບ;

3. ລາຍງານ, ສະໜອງຂໍ້ມູນ, ເອກະສານບໍ່ຖືກກັບຄວາມຈິງ ແກ່ນັກກວດສອບ;

4. ຊຸກເຊື່ອງ, ທຳລາຍເອກະສານ, ວັດຖຸສິ່ງຂອງ ທີ່ເປັນຫຼັກຖານ ຂອງການກວດສອບ;

5. ຂັດຂວາງ, ຖ່ວງດຶງ, ສ້າງຄວາມຫຍຸ້ງຍາກ, ນາບຂູ່ນັກກວດສອບ ຫຼື ບຸກຄົນ ທີ່ກ່ຽວຂ້ອງກັບການກວດສອບ;

6. ໃຫ້ສິນບົນນັກກວດສອບ ຫຼື ບຸກຄົນທີ່ກ່ຽວຂ້ອງກັບການກວດສອບ;

7. ລະເມີດ ແລະ ຍົກເລີກ ສັນຍາກວດສອບ ແຕ່ຝ່າຍດຽວ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

### ມາດຕາ 71 ຂໍ້ຫ້າມສຳລັບ ບຸກຄົນ ແລະ ການຈັດຕັ້ງອື່ນ

ຫ້າມບຸກຄົນ ແລະ ການຈັດຕັ້ງອື່ນ ມີ ພຶດຕິກຳ ດັ່ງນີ້:

1. ຍຸແຍ່, ຫາເລື່ອງ, ແຊກແຊງ, ກ້າວກ່າຍ ໃນເວລາດຳເນີນການກວດສອບ ຫຼື ກີດກັ້ນວຽກງານກວດສອບ ຂອງນັກກວດສອບຕາມກົດໝາຍ;

2. ນາບຂູ່ນັກກວດສອບ ຫຼື ປົກປ້ອງເປົ້າໝາຍຖືກກວດສອບ;

3. ໃຫ້ການບໍລິການດ້ານບັນຊີ ແລະ ກວດສອບ ໂດຍບໍ່ໄດ້ຮັບອະນຸຍາດ;

4. ແອບອ້າງຕົນເອງເປັນ ນັກກວດສອບ ຫຼື ນັກຊ່ຽວຊານບັນຊີ ຫຼື ນັກກວດສອບຕາມກົດໝາຍ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

# ພາກທີ X
# ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 72 ຮູບການແກ້ໄຂຂໍ້ຂັດແຍ່ງ**

ຂໍ້ຂັດແຍ່ງ ກ່ຽວກັບວຽກງານກວດສອບອິດສະລະ ສາມາດແກ້ໄຂດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການປະນີປະນອມ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຮ້ອງຟ້ອງຕໍ່ສານປະຊາຊົນ;
5. ການແກ້ໄຂທີ່ມີລັກສະນະສາກົນ.

**ມາດຕາ 73 ການແກ້ໄຂດ້ວຍການປະນີປະນອມ**

ໃນຂໍ້ຂັດແຍ່ງທີ່ເກີດຂຶ້ນລະຫວ່າງ ເປົ້າໝາຍຖືກກວດສອບ, ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ ຄູ່ກໍລະນີ ສາມາດດໍາເນີນການປຶກສາຫາລື, ປະນີປະນອມກັນ ເພື່ອໃຫ້ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

**ມາດຕາ 74 ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີມີຂໍ້ຂັດແຍ່ງ ກ່ຽວກັບວຽກງານກວດສອບອິດສະລະ ຄູ່ກໍລະນີມີສິດສະເໜີຕໍ່ຂະແໜງການການເງິນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອແກ້ໄຂທາງດ້ານບໍລິຫານ ຕາມລະບຽບກົດໝາຍ.

**ມາດຕາ 75 ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີມີຂໍ້ຂັດແຍ່ງ ກ່ຽວກັບວຽກງານກວດສອບອິດສະລະ ຄູ່ກໍລະນີ ມີສິດສະເໜີ ຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມການຕົກລົງກັນ ເພື່ອພິຈາລະນາແກ້ໄຂຕາມລະບຽບກົດໝາຍ.

**ມາດຕາ 76 ການຮ້ອງຟ້ອງຕໍ່ສານປະຊາຊົນ**

ໃນກໍລະນີມີຂໍ້ຂັດແຍ່ງ ກ່ຽວກັບວຽກງານກວດສອບອິດສະລະ ຄູ່ກໍລະນີມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນຕາມລະບຽບກົດໝາຍ.

**ມາດຕາ 77 ການແກ້ໄຂທີ່ມີລັກສະນະສາກົນ**

ການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບວຽກງານກວດສອບອິດສະລະ ທີ່ມີລັກສະນະສາກົນ ໃຫ້ປະຕິບັດຕາມສັນຍາສາກົນ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ.

# ພາກທີ XI
# ການຄຸ້ມຄອງ ແລະ ກວດກາ ວຽກງານກວດສອບອິດສະລະ
## ໝວດທີ 1
## ການຄຸ້ມຄອງວຽກງານກວດສອບອິດສະລະ

**ມາດຕາ 78 ອົງການຄຸ້ມຄອງ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານກວດສອບອິດສະລະ ຢ່າງລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງການເງິນຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານກວດສອບອິດສະລະ ປະກອບດ້ວຍ:

1. ກະຊວງການເງິນ ຊຶ່ງມີກົມບັນຊີ ເປັນເສນາທິການ;
2. ພະແນກການເງິນ ແຂວງ, ນະຄອນ.

ໃນກໍລະນີຈໍາເປັນ ເມື່ອມີການຂະຫຍາຍຕົວຂອງວຽກງານກວດສອບອິດສະລະ ອາດຈະມອບໃຫ້ຫ້ອງການການເງິນ ເມືອງ, ເທດສະບານ ຄຸ້ມຄອງກໍໄດ້.

**ມາດຕາ 79 ສິດ ແລະ ໜ້າທີ່ ຂອງກະຊວງການເງິນ**

ໃນການຄຸ້ມຄອງວຽກງານກວດສອບອິດສະລະ ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ, ປັບປຸງ ແຜນຍຸດທະສາດ, ແຜນນະໂຍບາຍ ແລະ ລະບຽບກົດໝາຍກ່ຽວກັບວຽກງານກວດສອບອິດສະລະ ໂດຍປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ;

2. ຫັນແຜນຍຸດທະສາດ, ແຜນນະໂຍບາຍ ໃຫ້ກາຍເປັນແຜນການ, ແຜນງານ, ໂຄງການລະອຽດ ກ່ຽວກັບວຽກງານກວດສອບອິດສະລະ ຂອງຂະແໜງການການເງິນ ຕາມຂອບເຂດຄວາມຮັບຜິດຊອບ ຂອງຕົນ;

3. ອອກມາດຕະຖານ, ລະບຽບການ, ຄໍາແນະນໍາ ແລະ ຂັ້ນຕອນດໍາເນີນງານ ກ່ຽວກັບການກວດສອບອິດສະລະ ເປັນແຕ່ລະໄລຍະ ເພື່ອໃຫ້ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບຈັດຕັ້ງປະຕິບັດການກວດສອບອິດສະລະຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ;

4. ໂຄສະນາ, ເຜີຍແຜ່ ແຜນຍຸດທະສາດ, ແຜນນະໂຍບາຍ ແລະ ລະບຽບກົດໝາຍກ່ຽວກັບວຽກງານກວດສອບອິດສະລະ;

5. ແຕ່ງຕັ້ງ ແລະ ປົດຕໍາແໜ່ງ ປະທານ, ຮອງປະທານ ແລະ ຄະນະບໍລິຫານຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ຕາມການສະເໜີຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ;

6. ກໍານົດລະບຽບການ ກ່ຽວກັບການເປັນນັກຊ່ຽວຊານບັນຊີ;

7. ຊີ້ນຳ, ຊຸກຍູ້, ຕິດຕາມ, ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳອື່ນກ່ຽວກັບວຽກງານກວດສອບອິດສະລະ, ມາດຕະຖານວິຊາຊີບດ້ານການກວດສອບ ແລະ ຈັນຍາບັນ ສຳລັບນັກວິຊາຊີບການບັນຊີ ເປັນປະຈຳໃນແຕ່ລະໄລຍະ;

8. ຊີ້ນຳ, ຄຸ້ມຄອງ ແລະ ຕິດຕາມ ການເຄື່ອນໄຫວຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ;

9. ຄຸ້ມຄອງ ແລະ ຕິດຕາມ ການດຳເນີນວິຊາຊີບ ຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ;

10. ອອກ, ສັ່ງໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ແລະ ໃບອະນຸຍາດເປັນນັກກວດສອບຕາມກົດໝາຍ;

11. ບຳລຸງ, ສ້າງ ແລະ ຍົກລະດັບຄວາມຮູ້ຄວາມສາມາດ ໃຫ້ແກ່ພະນັກງານທີ່ຮັບຜິດຊອບວຽກງານບັນຊີ ແລະ ກວດສອບ;

12. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານກວດສອບອິດສະລະ;

13. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານກວດສອບອິດສະລະ ຕໍ່ລັດຖະບານຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 80 ສິດ ແລະ ໜ້າທີ່ ຂອງພະແນກການເງິນ ແຂວງ, ນະຄອນ**

ໃນການຄຸ້ມຄອງວຽກງານກວດສອບອິດສະລະ ພະແນກການເງິນ ແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດ, ແຜນນະໂຍບາຍ ແລະ ລະບຽບກົດໝາຍ ກ່ຽວກັບວຽກງານກວດສອບອິດສະລະ;

2. ໂຄສະນາ, ເຜີຍແຜ່ ແຜນຍຸດທະສາດ, ແຜນນະໂຍບາຍ ແລະ ລະບຽບກົດໝາຍ ກ່ຽວກັບວຽກງານກວດສອບອິດສະລະ;

3. ສະເໜີຍົກລະດັບ ຄວາມຮູ້ຄວາມສາມາດ ໃຫ້ແກ່ພະນັກງານທີ່ຮັບຜິດຊອບວຽກງານບັນຊີ ແລະ ກວດສອບ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

4. ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດລະບຽບກົດໝາຍ ກ່ຽວກັບວຽກງານກວດສອບອິດສະລະໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ກ່ຽວກັບການປະຕິບັດວຽກງານກວດສອບອິດສະລະ;

6. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານກວດສອບອິດສະລະຕາມການມອບໝາຍ;

7. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານກວດສອບອິດສະລະ ຕໍ່ກະຊວງການເງິນ ແລະ ອົງການປົກຄອງ ແຂວງ, ນະຄອນ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 81 ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນ**

ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ຕິດຕາມ ແລະ ປະສານສົມທົບ ແລະ ໃຫ້ຄວາມຮ່ວມມື ກັບຂະແໜງການການເງິນ ໃນການຈັດຕັ້ງປະຕິບັດວຽກງານກວດສອບອິດສະລະ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານກວດສອບອິດສະລະ

**ມາດຕາ 82 ອົງການກວດກາ**

ອົງການກວດກາວຽກງານກວດສອບອິດສະລະ ປະກອບດ້ວຍ ອົງການກວດກາພາຍໃນ ແລະ ພາຍນອກ.

ອົງການກວດກາພາຍໃນ ແມ່ນ ອົງການດຽວກັນກັບ ອົງການຄຸ້ມຄອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 78 ຂອງກົດໝາຍສະບັບນີ້.

ອົງການກວດກາພາຍນອກ ມີ ສະພາແຫ່ງຊາດ, ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ປະຊາຊົນ.

**ມາດຕາ 83 ຈຸດປະສົງຂອງການກວດກາ**

ການກວດກາ ມີ ຈຸດປະສົງຕົ້ນຕໍ ດັ່ງນີ້:

1. ເພື່ອໃຫ້ການດຳເນີນວຽກງານກວດສອບອິດສະລະ ມີຄວາມຖືກຕ້ອງ ຕາມມາດຕະຖານວິຊາຊີບດ້ານການກວດສອບ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ;
2. ເພື່ອໃຫ້ບົດລາຍງານການກວດສອບ ທີ່ສ້າງຂຶ້ນໂດຍວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຫຼື ນັກກວດສອບຕາມກົດໝາຍ ສອດຄ່ອງກັບສະພາບການຕົວຈິງ.

**ມາດຕາ 84 ເນື້ອໃນການກວດກາ**

ການກວດກາ ມີ ເນື້ອໃນຕົ້ນຕໍ ດັ່ງນີ້:

1. ກວດກາ ການຈັດຕັ້ງປະຕິບັດ ກົດໝາຍ, ລະບຽບການຕ່າງໆ ແລະ ມາດຕະຖານກ່ຽວກັບວຽກງານກວດສອບອິດສະລະ;
2. ກວດກາ ການນຳໃຊ້ສິດ, ການປະຕິບັດໜ້າທີ່, ຄວາມຮັບຜິດຊອບຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ;

3. ກວດກາ ຄວາມຮັບຜິດຊອບ, ການປະພຶດ ແລະ ແບບແຜນວິທີເຮັດວຽກຂອງພະນັກງານ ກ່ຽວກັບວຽກງານກວດສອບອິດສະລະ.

### ມາດຕາ 85 ຮູບການການກວດກາ

ການກວດກາປະກອບດ້ວຍ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາ ທີ່ດໍາເນີນໄປຕາມແຜນການຢ່າງເປັນປະຈໍາ ແລະ ມີການກໍານົດເວລາອັນແນ່ນອນ.

ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈໍາເປັນ ຊຶ່ງຕ້ອງແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນ ການກວດກາໂດຍຮີບດ່ວນ ຊຶ່ງບໍ່ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ໃນການກວດກາ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມລະບຽບກົດໝາຍ ຢ່າງເຂັ້ມງວດ.

## ພາກທີ XII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 86 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ດໍາເນີນການກວດສອບຖືກຕ້ອງຕາມລະບຽບກົດໝາຍ, ມາດຕະຖານວິຊາຊີບດ້ານການກວດສອບ ແລະ ຈັນຍາບັນສໍາລັບນັກວິຊາຊີບການບັນຊີ, ໃຫ້ການຮ່ວມມື ແລະ ການສະໜອງຂໍ້ມູນຂ່າວສານ ກ່ຽວກັບການດໍາເນີນງານດ້ານວິຊາຊີບຂອງ ນັກຊ່ຽວຊານບັນຊີ ແລະ ນັກກວດສອບ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 87 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນທາງແພ່ງ ຫຼື ລົງໂທດທາງອາຍາຕາມແຕ່ກໍລະນີ ເບົາ ຫຼື ໜັກ.

### ມາດຕາ 88 ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ມີລັກສະນະເບົາ ຈະຖືກສຶກສາອົບຮົມ ຫຼື ກ່າວເຕືອນ.

**ມາດຕາ 89 ມາດຕະການທາງວິໄນ**

ພະນັກງານ, ລັດຖະກອນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງວິໄນຕາມແຕ່ກໍລະນີ ດັ່ງນີ້:

1. ຕິຕຽນ, ກ່າວເຕືອນຄວາມຜິດພ້ອມທັງບັນທຶກໄວ້ ໃນສຳນວນເອກະສານຊີວະປະຫວັດຂອງບຸກຄົນນັ້ນ;

2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ຫຼື ການຍ້ອງຍໍ;

3. ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕໍ່າກວ່າເກົ່າ;

4. ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

**ມາດຕາ 90 ມາດຕະການປັບໃໝ**

ກ. ສຳລັບ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ມີ ດັ່ງນີ້:

1. ດຳເນີນການກວດສອບ ໃຫ້ວິສາຫະກິດທີ່ຕົນເອງ ໃຫ້ບໍລິການດ້ານການບັນຊີ ຈະຖືກປັບໃໝ ສາມເທົ່າ ຂອງມູນຄ່າທີ່ໄດ້ຮັບຈາກການບໍລິການ;

2. ອອກບົດລາຍງານການກວດສອບ ແລະ ໃຫ້ຄຳເຫັນຢັ້ງຢືນບໍ່ຖືກຕ້ອງຕາມຄວາມເປັນຈິງ ຈະຖືກປັບໃໝ ສາມເທົ່າ ຂອງມູນຄ່າທີ່ໄດ້ຮັບຈາກການບໍລິການ;

3. ບໍລິການດ້ານບັນຊີ ແລະ ກວດສອບ ໃຫ້ຫົວໜ່ວຍຖືບັນຊີທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ຈະຖືກປັບໃໝ ສິບລ້ານກີບ;

4. ບໍລິການດ້ານບັນຊີ ແລະ ກວດສອບ ໃຫ້ວິສາຫະກິດ ທີ່ມີຍາດພີ່ນ້ອງໃກ້ຊິດ ເປັນຫົວໜ້າບັນຊີ ຫຼື ຜູ້ບໍລິຫານ ຈະຖືກປັບໃໝ ຊາວລ້ານກີບ;

5. ເປີດເຜີຍຄວາມລັບຂອງເປົ້າໝາຍຖືກກວດສອບ ຫຼື ລູກຄ້າ ຈະຖືກປັບໃໝສອງເທົ່າຂອງມູນຄ່າເສັຍຫາຍ;

6. ບໍ່ລາຍງານຜົນການເຄື່ອນໄຫວຂອງວິສາຫະກິດໃຫ້ກະຊວງການເງິນ ພາຍຫຼັງມີການກ່າວເຕືອນແລ້ວ ຈະຖືກປັບໃໝສອງລ້ານກີບ;

7. ໂຄສະນາ ບອກເລົ່າ ຄວາມຮູ້ຄວາມສາມາດ ຫຼື ໃຊ້ວິທີທີ່ບໍ່ເໝາະສົມໃນການຊອກລູກຄ້າ ແລະ ແຈ້ງຊີວະປະຫວັດຂອງພະນັກງານ ແລະ ວິສາຫະກິດບັນຊີ ແລະ ວິສາຫະກິດ ກວດສອບບໍ່ຖືກຕ້ອງ ຈະຖືກປັບໃໝ ຊາວລ້ານກີບ;

8. ບໍ່ມາຕໍ່ໃບຕິດຕາມການດຳເນີນທຸລະກິດ ພາຍຫຼັງມີການກ່າວເຕືອນແລ້ວ ຈະຖືກປັບໃໝ ຫ້າລ້ານກີບ.

ຂ. ສຳລັບ ນັກກວດສອບ ມີ ດັ່ງນີ້:

1. ຊື້-ຂາຍ ຮຸ້ນ, ພັນທະບັດ ຫຼື ຊັບສິນອື່ນ ຂອງເປົ້າໝາຍຖືກກວດສອບ ໃນເວລາດຳເນີນການກວດສອບ ຈະຖືກປັບໃໝ ສາມເທົ່າ ຂອງລາຍຮັບຊື້-ຂາຍຮຸ້ນ;

2. ຮຽກຮ້ອງ ຫຼື ສວຍໃຊ້ຕຳແໜ່ງນັກກວດສອບ ຮັບຜົນປະໂຫຍດອື່ນ ຈາກເປົ້າໝາຍຖືກກວດສອບ ນອກຈາກທີ່ໄດ້ກຳນົດໄວ້ໃນສັນຍາກວດສອບ ຈະຖືກປັບໃໝ ສາມເທົ່າ ຂອງມູນຄ່າທີ່ໄດ້ຮັບ;

3. ເປີດເຜີຍຄວາມລັບຂອງເປົ້າໝາຍຖືກກວດສອບ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າເສັຍຫາຍ.

ຄ. ສໍາລັບ ນັກຊ່ຽວຊານບັນຊີ ມີ ດັ່ງນີ້:

1. ໃຫ້ເຊົ່າ, ໃຫ້ຢືມ, ມອບໂອນ, ຂາຍ ໃບຢັ້ງຢືນນັກຊ່ຽວຊານບັນຊີ ຈະຖືກປັບໃໝ ຊາວລ້ານກີບ ແລະ ຖືກລຶບລ້າງອອກຈາກບັນຊີລາຍຊື່ນັກຊ່ຽວຊານບັນຊີ;

2. ເຮັດວຽກຢູ່ໃນສອງ ຫຼື ຫຼາຍວິສາຫະກິດ ພ້ອມກັນ ຈະຖືກປັບໃໝ ສິບລ້ານກີບ.

ງ. ສໍາລັບເປົ້າໝາຍຖືກກວດສອບ ມີ ດັ່ງນີ້:

1. ເປົ້າໝາຍຖືກກວດສອບຕາມກົດໝາຍ ບໍ່ມີບົດລາຍງານການກວດສອບເອກະສານລາຍງານການເງິນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ຈະຖືກປັບໃໝ ຫົກລ້ານກີບ;

2. ຄັດເລືອກ ແລະ ຕົກລົງຮັບເອົາ ວິສາຫະກິດກວດສອບ ທີ່ບໍ່ໄດ້ຮັບອະນຸຍາດ ຫຼື ທີ່ຖືກສັ່ງໂຈະ ຫຼື ລຶບລ້າງ ໃບອະນຸຍາດດໍາເນີນທຸລະກິດ ຈະຖືກປັບໃໝ ຫ້າສິບລ້ານກີບ.

ຈ. ສໍາລັບ ບຸກຄົນ ແລະ ການຈັດຕັ້ງອື່ນ ມີ ດັ່ງນີ້:

1. ໃຫ້ການບໍລິການດ້ານບັນຊີ ແລະ ກວດສອບ ໂດຍບໍ່ມີໃບອະນຸຍາດດໍາເນີນທຸລະກິດຖືກຕ້ອງຕາມລະບຽບກົດໝາຍ ຈະຖືກປັບໃໝ ຊາວລ້ານກີບ;

2. ອ້າງຕົນວ່າເປັນນັກຊ່ຽວຊານບັນຊີ ຫຼື ນັກກວດສອບຕາມກົດໝາຍ ໂດຍບໍ່ມີປະກາສະນິຍະບັດ ແລະ ໃບອະນຸຍາດ ຢ່າງຖືກຕ້ອງຕາມກົດໝາຍ ຈະຖືກປັບໃໝ ສິບລ້ານກີບ.

### ມາດຕາ 91 ມາດຕະການທາງແພ່ງ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສັຍຫາຍໃຫ້ແກ່ຜູ້ອື່ນ ຕ້ອງຮັບຜິດຊອບໃຊ້ແທນຄ່າເສັຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

### ມາດຕາ 92 ມາດຕະການທາງອາຍາ

ບຸກຄົນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທໍາຜິດທາງອາຍາ ເຊັ່ນ ເປີດເຜີຍຄວາມລັບ, ປອມແປງ, ທໍາລາຍເອກະສານການບັນຊີ, ລັກໂລບ, ຍັກຍອກ, ສໍ້ໂກງ, ສວຍໃຊ້ໜ້າທີ່ຕໍາແໜ່ງ, ໃຊ້ອໍານາດເກີນຂອບເຂດ ກ່ຽວກັບວຽກງານກວດສອບອິດສະລະຈະຖືກລົງໂທດຕາມທີ່ໄດ້ກໍານົດໄວ້ໃນກົດໝາຍອາຍາ ຫຼື ກົດໝາຍອື່ນທີ່ໄດ້ກໍານົດໂທດທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

# ພາກທີ XIII
# ບົດບັນຍັດສຸດທ້າຍ

**ມາດຕາ 93 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 94 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ສຳລັບ ຜູ້ມີປະກາສະນີຍະບັດ ຫຼື ໃບຢັ້ງຢືນ ທີ່ປຶກສາບັນຊີ ສາມາດປະກອບອາຊີບ ຄືກັນກັບນັກຊ່ຽວຊານບັນຊີໄດ້ ໃນກຳນົດ ຫ້າປີ ພາຍຫຼັງກົດໝາຍສະບັບນີ້ ມີຜົນສັກສິດເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້